ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ
Lao Securities Commission Office

# ບົດລາຍງານປະຈຳປີ
# ANNUAL REPORT 2024





ຖະໜົນໄກສອນ ພົມວິຫານ, ບ້ານໂພນສະອາດ, ໜ່ວຍ 20 ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ

www.lsc.gov.la, Email: lsc@lsc.gov.la

(+856) 21 217 770, Fax: (+856) 21 217 806

LSCO (ສຳນັກງານ ຄຄຊ)

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບລາວ
Lao Securities Commission Office: LSCO

# ບົດຄຳເຫັນຂອງຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ



ຕະຫຼາດທຶນ ເປັນອີກໜຶ່ງແຫຼ່ງທຶນ ແລະ ສູນກາງການລະດົມທຶນ ທີ່ມີຄວາມສຳຄັນຕໍ່ລະບົບເສດຖະກິດ ແລະ ສັງຄົມ ຂອງ ສປປ ລາວ ຊຶ່ງຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໃນນາມອົງການຄຸ້ມຄອງວຽກງານຫຼັກຊັບ ໄດ້ເອົາໃຈໃສ່ປະຕິບັດພາລະບົດບາດຂອງຕົນ ໃນການສົ່ງເສີມ, ພັດທະນາ ແລະ ຄຸ້ມຄອງຕິດຕາມກວດກາວຽກງານຫຼັກຊັບ ເພື່ອເຮັດໃຫ້ຕະຫຼາດທຶນຂອງ ສປປ ລາວ ເຕີບໃຫຍ່ຂະຫຍາຍຕົວຢ່າງເຂັ້ມແຂງ ມີປະສິດທິພາບ, ໜ້າເຊື່ອຖື ແລະ ສອດຄ່ອງກັບມາດຕະຖານສາກົນ ເທື່ອລະກ້າວ.

ໃນປີ 2024 ຍັງເປັນປີທີ່ຫຼາຍໆປະເທດໄດ້ຮັບຜົນກະທົບຈາກພາວະເສດຖະກິດຖົດຖອຍ ເຖິງຢ່າງໃດກໍ່ຕາມ ບັນດາປະເທດຕ່າງໆ ກໍ່ໄດ້ມີຄວາມພະຍາຍາມໃນການແກ້ໄຂພາວະຖົດຖອຍດັ່ງກ່າວ, ພາວະຖົດຖອຍ ຂອງເສດຖະກິດໃນຄັ້ງນີ້ ແມ່ນໄດ້ຮັບຜົນກະທົບ ແລະ ຄວາມກັງວົນຈາກ ບັນຫາທີ່ເກີດມາຈາກ ບັນຫາຂອງ ເງິນເຟີ້, ຄວາມກັງວົນກັບມາດຕະການຂອງ ທະນາຄານກາງ ສ. ອາເມລິກາ (FED), ບັນຫາອະສັງຫາລິມະຊັບ, ບັນຫາ ໄພທຳມະຊາດ ແລະ ບັນຫາທາງພູມສາດຄວາມຂັດແຍ່ງລະຫວ່າງປະເທດ ທີ່ຍັງຄົງເປັນປັດໃຈກົດດັນສະພາບການໂດຍລວມຂອງເສດຖະກິດໂລກ ແລະ ກະທົບຕໍ່ກັບ ຕະຫຼາດທຶນສາກົນ ເຖິງແມ່ນວ່າ ໂດຍລວມເສດຖະກິດໂລກ ແລະ ໂລກເຮົາຈະຍັງຄົງມີຄວາມທ້າທາຍຫຼາຍຢ່າງທີ່ຍັງຄົງ ເກີດຂຶ້ນໃນປີ 2024 ກໍ່ຕາມ, ແຕ່ກໍ່ຍັງມີຄວາມພະຍາຍາມຂອງນານາຊາດໃນການສູ້ຊົນແກ້ໄຂບັນຫາເສດຖະກິດ ແລະ ສັງຄົມ ດ້ວຍຄວາມເຂັ້ມແຂງ ເຮັດໃຫ້ປີ 2024 ຜ່ານພົ້ນໄປ ດ້ວຍຫຼາຍປັດໃຈ ແລະ ຫຼາຍເຫດການທີ່ສຳຄັນ ແລະ ເກື້ອໜູນໃຫ້ແກ່ຄວາມພະຍາຍາມ ໃນການພັດທະນາເສດຖະກິດຂອງຫຼາຍປະເທດ ຊຶ່ງໃນນັ້ນກໍ່ຄື ກຸ່ມປະເທດອາຊຽນ ແລະ ສປປ ລາວ ເຮົາ ໂດຍມີຄວາມຮ່ວມມືຂອງກຸ່ມປະເທດສະມາຊິກອາຊຽນຜ່ານ The ASEAN Capital Market Forum (ACMF) ທີ່ເປັນທັງຂີດໝາຍ, ຄວາມຮ່ວມມື ແລະ ຄວາມພະຍາຍາມຂອງກຸ່ມປະເທດສະມາຊິກອາຊຽນທີ່ຈະສູ້ຊົນ ແລະ ເຕີບໂຕໄປພ້ອມກັນໃນສະພາບການເສດຖະກິດໂລກທີ່ມີຄວາມບໍ່ແນ່ນອນ.

ສຳລັບ ສປປ ລາວ ໃນປີ 2024 ໄດ້ສືບຕໍ່ສຸມໃສ່ຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກ, ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX, ເວົ້າສະເພາະ ຢູ່ໃນຂະແໜງຕະຫຼາດທຶນຂອງພວກເຮົາ ກໍ່ພວມສຸມໃສ່ຜັນຂະຫຍາຍຈັດຕັ້ງປະຕິບັດບັນດາແຜນງານ-ໂຄງການ ພັດທະນາຕະຫຼາດທຶນ 5 ປີ (2021-2025).

ການພັດທະນາຕະຫຼາດທຶນ ໃນປີ 2024 ບົນພື້ນຖານການຊີ້ນຳ-ນຳພາຢ່າງໃກ້ສິດຈາກ ຄະນະກຳມະການຄຸ້ມຄອງຫຼັກຊັບ, ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໂດຍສົມທົບກັບບັນດາຜູ້ມີສ່ວນຮ່ວມໃນວຽກງານຕະຫຼາດທຶນ ໄດ້

ສຸມໃສ່ຈັດຕັ້ງປະຕິບັດວຽກງານຕາມແຜນພັດທະນາຕະຫຼາດທຶນ ໂດຍລັດຖະບານໄດ້ຮັບຮອງ ແລະ ປະກາດໃຊ້ຍຸດທະສາດການພັດທະນາຕະຫຼາດທຶນ ຂອງ ສປປ ລາວ 10 ປີ (2021-2030) ແລະ ວິໄສທັດຮອດປີ 2035; ສຳເລັດການສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ຈຳນວນ 08 ສະບັບ, ດ້ານການຂະຫຍາຍ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ບໍລິສັດຈົດທະບຽນ ແລະ ພັດທະນາຜະລິດຕະພັນຫຼັກຊັບ ໃນປີ 2024 ມີຍອດສະສົມການລະດົມທຶນ ທັງພາຍໃນ ແລະ ຕ່າງປະເທດ 55,033.72 ຕື້ກີບ (ຮຸ້ນ, ຮຸ້ນກູ້ ແລະ ພັນທະບັດ), ສຳເລັດການຄົ້ນຄວ້າປັບປຸງແຜນວຽກການຈັດຕັ້ງປະຕິບັດມາດຕະຖານສາກົນດ້ານການລາຍງານການເງິນ (IFRS Roadmap) ສຳລັບຂະແໜງຫຼັກຊັບ, ສຳເລັດບົດຄົ້ນຄ້ວາການຫັນລັດວິສາຫະກິດ ຜ່ານກົນໄກຕະຫຼາດທຶນ ແລະ ບົດຄົ້ນຄວ້າຄວາມເປັນໄປໄດ້ໃນການລະດົມທຶນຜ່ານຕະຫຼາດທຶນ ແລະ ເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບລາວ ຂອງບັນດາທະນາຄານທຸລະກິດພາຍໃນປະເທດ ແລະ ສຳເລັດການຄົ້ນຄວ້າການອອກຈຳໜ່າຍພັນທະບັດລັດຖະບານ ຜ່ານຕະຫຼາດຫຼັກຊັບ ບ້ວງສະກຸນເງິນຢວນ. ດ້ານການພັດທະນາຜະລິດຕະພັນຫຼັກຊັບ ໄດ້ສຳເລັດບົດຄົ້ນຄວ້າການສ້າງກະດານຮອງ ສຳລັບຊື້ຂາຍຮຸ້ນຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ. ດ້ານການຄົ້ນຄວ້າພັນທະບັດສີຂຽວ, ສັງຄົມ ແລະ ຍືນຍົງ ໄດ້ສຳເລັດການເຊັນບົດບັນທຶກຄວາມເຂົ້າໃຈ (MOU) ລະຫວ່າງ ສຄຄຊ ແລະ ສະຖາບັນເຕີບໂຕສີຂຽວ (GGGI) ເພື່ອຊຸກຍູ້ສົ່ງເສີມການອອກຈຳໜ່າຍຮຸ້ນກູ້ສີຂຽວ ຢູ່ ສປປ ລາວ, ສຳເລັດອອກຄຳແນະນຳວ່າດ້ວຍການອອກຮຸ້ນກູ້ ສີຂຽວ, ສັງຄົມ ແລະ ຍືນຍົງ ຂອງຕະຫຼາດທຶນລາວ.

ພ້ອມນີ້, ໄດ້ສຳເລັດການຄົ້ນຄວ້າກ່ຽວກັບການສ້າງຕັ້ງກອງທຶນເພື່ອການລົງທຶນໃນບໍລິສັດ (Private Equity Fund) ແລະ ກອງທຶນຮ່ວມລົງທຶນ (Venture Capital). ສຳລັບການຄຸ້ມຄອງສະຖາບັນສື່ກາງດ້ານຫຼັກຊັບ ໄດ້ສຳເລັດການຮັບຮອງ ແລະ ຕໍ່ອາຍຸສະຖາບັນສື່ກາງດ້ານຫຼັກຊັບອື່ນ ຈຳນວນ 10 ແຫ່ງ, ສຳເລັດການອອກ, ຕໍ່ອາຍຸ ແລະ ຍົກເລີກໃບຢັ້ງຢືນນັກວິຊາຊີບທຸລະກິດຫຼັກຊັບ ຈຳນວນ 23 ທ່ານ, ອອກໃບຮັບຮອງ ເປັນບໍລິສັດປະເມີນມູນຄ່າຊັບສິນ 1 ແຫ່ງ ແລະ ຕໍ່ອາຍຸໃບຮັບຮອງເປັນທະນາຄານດູແລຊັບສິນ 1 ແຫ່ງ ພ້ອມທັງ ໄດ້ສົມທົບກັບ ຕະຫຼາດຫຼັກຊັບລາວ ແລະ ບໍລິສັດຫຼັກຊັບ ເພື່ອຊຸກຍູ້ການສ້າງຕັ້ງສະມາຄົມຕະຫຼາດທຶນລາວ. ຄຽງຄູ່ກັນນີ້, ສຄຄຊ ໄດ້ສືບຕໍ່ໃຫ້ຄວາມສຳຄັນໃນການຝຶກອົບຮົມ ແລະ ໂຄສະນາເຜີຍແຜ່ ວຽກງານຕະຫຼາດທຶນໃຫ້ແກ່ມວນຊົນ ຈຳນວນ 5 ຄັ້ງ (8 ຫົວຂໍ້), ສຳເລັດຈັດຊຸດຝຶກອົບຮົມ ຈຳນວນ 9 ຫົວຂໍ້, ສຳເລັດການໂຄສະນາຜ່ານສື່ຕ່າງໆ ຈຳນວນ 28 ຫົວຂໍ້. ພ້ອມນີ້, ເພື່ອຍົກສູງຄວາມຮູ້, ຄວາມສາມາດທາງດ້ານວິຊາການ ສຄຄຊ ໄດ້ເພີ່ມທະວີການຮ່ວມມືໃນຮູບແບບ ສອງຝ່າຍ, ຫຼາຍຝ່າຍ ແລະ ອົງການຈັດຕັ້ງສາກົນ ໄດ້ຂຶ້ນແຜນສືບຕໍ່ໂຄງການຊ່ວຍເຫຼືອລ້າແບບສາມຝ່າຍ ສສ.ຫວຽດນາມ, ລຸກຊຳບວກ ແລະ ສປປ ລາວ (Lao/032). ນອກຈາກນີ້, ໃນປີ 2024, ສຄຄຊ ໄດ້ສຳເລັດການເປັນເຈົ້າພາບຈັດກອງປະຊຸມການພັດທະນາຕະຫຼາດທຶນອາຊຽນ (ASEAN Capital Markets Forum: ACMF) ຈຳນວນ 4 ຄັ້ງ ພ້ອມທັງສຳເລັດການຈັດງານສະເຫຼີມສະຫຼອງ ACMF ຄົບຮອບ 20 ປີ, ກອງປະຊຸມສາກົນ ແລະ ຝຶກອົບຮົມ ACMF-ISSB.

ສຳລັບທິດທາງແຜນການໃນປີ 2025 ສຄຄຊ ຈະສຸມໃສ່ສ້າງ ແລະ ປັບປຸງນິຕິກຳລຸ່ມກົດໝາຍໃຫ້ມີຄວາມສອດຄ່ອງກັບກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ແລະ ເປັນບ່ອນອີງໃນການຄຸ້ມຄອງເຄື່ອນໄຫວວຽກງານຫຼັກຊັບ ໃຫ້ມີຄວາມໜັກແໜ້ນ ແລະ ເຂັ້ມແຂງ, ປະເມີນຮອບດ້ານວຽກງານພັດທະນາຕະຫຼາດທຶນ ແລະ ທົບທວນປັບປຸງຍຸດທະສາດການພັດທະນາຕະຫຼາດທຶນຂອງ ສປປ ລາວ 10 ປີ (2021-2030) ແລະ ວິໄສທັດຮອດປີ 2035 (ສະບັບປັບປຸງ), ຄົ້ນຄວ້າ ແລະ ຊຸກຍູ້ບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ຈົດທະບຽນ ໃນຕະຫຼາດຫຼັກຊັບລາວ ຢ່າງໜ້ອຍ 1 ແຫ່ງ ແລະ ຊຸກຍູ້ບັນດາວິສາຫະກິດພາຍໃນ ໃຫ້ໄດ້ອອກຈຳໜ່າຍຮຸ້ນກູ້ສີຂຽວ, ສັງຄົມ ແລະ ຍືນຍົງ ຢ່າງໜ້ອຍ 1 ແຫ່ງ, ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ກ່ຽວກັບການປັບປຸງແຜນວຽກ IFRS Roadmap, ປະສານສົມທົບກັບ ຕະຫຼາດຫຼັກຊັບລາວ ເພື່ອຄົ້ນຄວ້າປັບປຸງ ຄຳແນະນຳກ່ຽວກັບ ການປະເມີນ CG Scorecard, ໃຫ້ສຳເລັດການສ້າງກະດານຊື້ຂາຍ ຮຸ້ນວິສາຫະກິດຂະໜາດນ້ອຍ ແລະ ກາງ ໃນຕະຫຼາດຫຼັກຊັບລາວ, ຊຸກຍູ້ການສ້າງຕັ້ງສະມາຄົມໃນວຽກງານຫຼັກຊັບ, ຊຸກຍູ້ການສ້າງຕັ້ງບໍລິສັດບໍລິຫານກອງທຶນເພື່ອການລົງທຶນ ຫຼື ກອງທຶນເພື່ອການລົງທຶນ ໃຫ້ໄດ້ຢ່າງໜ້ອຍ 1 ກອງທຶນ, ສ້າງບົດ

ຄົ້ນຄວ້ານະໂຍບາຍທາງດ້ານອາກອນ ແລະ ບໍ່ແມ່ນອາກອນເພື່ອຊຸກຍູ້ການສ້າງຕັ້ງກອງທຶນ PE/VC. ພ້ອມນີ້, ກໍ່ກະກຽມສະເໜີ IOSCO ປະເມີນຄວາມສອດຄ່ອງຂອງນິຕິກຳທີ່ກ່ຽວຂ້ອງເບື້ອງຕົ້ນ (Preliminary Assessment Procedure: PA) ກໍ່ຄື ການປະເມີນຂອງ ຄະນະກຳມະການທົບທວນຄວາມສອດຄ່ອງຂອງ IOSCO (Screening Group) ພ້ອມທັງສືບຕໍ່ຈັດຕັ້ງວຽກງານໂຄສະນາເຜີຍແຜ່ດ້ວຍຫຼາຍຮູບການທີ່ເໝາະສົມ, ສືບຕໍ່ຮ່ວມມື ໃນຮູບແບບສອງຝ່າຍ, ຫຼາຍຝ່າຍ ແລະ ອີງການຈັດຕັ້ງສາກົນ ຢ່າງເປັນປົກກະຕິ ເພື່ອຍາດແຍ່ງເອົາການຊ່ວຍເຫຼືອທາງດ້ານວິຊາການ ແລະ ຄົ້ນຄວ້າສືບຕໍ່ໂຄງການຊ່ວຍເຫຼືອລ້າແບບສາມຝ່າຍ ສສ.ຫວຽດນາມ, ລຸກຊຳບວກ ແລະ ສປປ ລາວ (Lao/032).

**ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ**

ສຳນັກງານ ຄຄຊ

ແພງສີ ແພງເມືອງ

# ສະຖິຕິສຳຄັນໃນປີ 2024




ປີ 2024 ໄດ້ສ້າງ ແລະ ປັບປຸງນິຕິກຳ 8 ສະບັບ ປະກອບມີ: ຂໍ້ຕົກລົງ 5 ສະບັບ, ແຈ້ງການ 1 ສະບັບ ແລະ ຄຳແນະນຳ 2 ສະບັບ (ປະຈຸບັນ ສຄຄຊ ມີນິຕິກຳທັງໝົດ 106 ສະບັບ)





ໃນປີ 2024 ນັກວິຊາຊີບທັງໝົດ **64 ຄົນ** ປະກອບມີ:

- ນັກວິຊາຊີບທຸລະກິດຫຼັກຊັບ 21 ຄົນ;
- ນັກວິຊາຊີບກວດສອບ 22 ຄົນ;
- ນັກວິຊາຊີບປະເມີນມູນຄ່າຊັບສິນ 21 ຄົນ.

- ປີ 2024 ມີບໍລິສັດຈົດທະບຽນ ທັງໝົດມີ **10** ແຫ່ງ;
- ຍອດສະສົມການລະດົມທຶນຜ່ານການອອກຫຼັກຊັບ (ຮຸ້ນ ແລະ ຮຸ້ນກູ້) ທັງພາຍໃນ ແລະ ຕ່າງປະເທດ ຮອດປັດຈຸບັນ: **30,147 ຕື້ກີບ**;
- ການອອກຈຳໜ່າຍພັນທະບັດ ຜ່ານ ຕະຫຼາດຫຼັກຊັບ: **999.6 ຕື້ກີບ; 114.9 ລ້ານໂດລາສະຫະລັດ** ແລະ **10.78 ຕື້ບາດ**;
- ຍອດສະສົມການລະດົມທຶນ ຜ່ານການອອກຈຳໜ່າຍພັນທະບັດ ຜ່ານ ຕະຫຼາດຫຼັກຊັບ ຮອດປີ 2024: **9,410.5 ຕື້ກີບ**; **249.41 ລ້ານໂດລາສະຫະລັດ** ແລະ **14,213.5 ຕື້ບາດ**.



ບັນຊີຜູ້ລົງທຶນທັງໝົດໃນປີ 2024 **ເພີ່ມຂຶ້ນ 879 ບັນຊີ**

(ທັງໝົດມີ **17,963 ບັນຊີ** ຄື:

ພາຍໃນ 14,435 ບັນຊີ

ຕ່າງປະເທດ 3,528 ບັນຊີ).



- ບໍລິສັດຫຼັກຊັບ **4 ແຫ່ງ**
- ບໍລິສັດກວດສອບ **4 ແຫ່ງ**
- ບໍລິສັດປະເມີນມູນຄ່າຊັບສິນ **8 ແຫ່ງ**
- ທະນາຄານດູແລຊັບສິນ **4 ແຫ່ງ**
- ບໍລິສັດຈັດລຳດັບຄວາມໜ້າເຊື່ອຖື **1 ແຫ່ງ**
- ແລະ ສະຖາບັນສື່ກາງອື່ນ ອີກ **11 ແຫ່ງ**.



- ມູນຄ່າການຊື້ຂາຍ ໃນປີ 2024 ແມ່ນ **31.07 ຕື້ກີບ** (ທັງໝົດນັບແຕ່ເປີດຕະຫຼາດມີ **1,817.16 ຕື້ກີບ**);
- ມູນຄ່າຕະຫຼາດໃນທ້າຍປີ 2024 ແມ່ນ **14,790.65 ຕື້ກີບ**;
- ດັດຊະນີຫຼັກຊັບທ້າຍປີ 2024 ປິດຢູ່ທີ່ **1, 150.07 ຈຸດ**.




- ປະຕິບັດມາດຕະການແຈ້ງເຕືອນ **1 ກໍລະນີ**.

# ສາລະບານ


I. ສະພາບຕະຫຼາດທຶນໃນປີ 2024 ____ 1

1. ສະພາບຕະຫຼາດທຶນຂອງຕ່າງປະເທດ ____ 1

2. ສະພາບຕະຫຼາດທຶນຂອງ ສປປ ລາວ ____ 1

II. ການຄຸ້ມຄອງວຽກງານຫຼັກຊັບໃນປີ 2024 ____ 2

1. ອົງການຄຸ້ມຄອງວຽກງານຫຼັກຊັບ ____ 2

1.1 ຄະນະກຳມະການຄຸ້ມຄອງຫຼັກຊັບ ____ 2

1.2 ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ____ 3

2. ຜົນສຳເລັດທີ່ພົ້ນເດັ່ນ ໃນປີ 2024 ____ 4

2.1 ນິຕິກຳທີ່ນຳໃຊ້ເຂົ້າໃນການຄຸ້ມຄອງວຽກງານຫຼັກຊັບ ແລະ ນະໂຍບາຍມະຫາພາກຕໍ່ກັບວຽກງານຫຼັກຊັບ ____ 4

2.1.1 ນິຕິກຳທີ່ນຳໃຊ້ເຂົ້າໃນການຄຸ້ມຄອງວຽກງານຫຼັກຊັບ ____ 4

2.1.2 ນະໂຍບາຍມະຫາພາກຕໍ່ກັບວຽກງານຫຼັກຊັບ ____ 5

2.2 ການຄຸ້ມຄອງການອອກຈຳໜ່າຍຫຼັກຊັບໃນຕະຫຼາດຂັ້ນໜຶ່ງ ແລະ ການຄຸ້ມຄອງການເຄື່ອນໄຫວຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ ____ 5

2.3 ການຄຸ້ມຄອງຕະຫຼາດຫຼັກຊັບ ແລະ ການເຄື່ອນໄຫວໃນຕະຫຼາດຂັ້ນສອງ ____ 7

2.4 ການຄຸ້ມຄອງສະຖາບັນສື່ກາງດ້ານຫຼັກຊັບ ແລະ ນັກວິຊາຊີບທຸລະກິດຫຼັກຊັບ ____ 8

2.5 ການປົກປ້ອງຜູ້ລົງທຶນລາຍຍ່ອຍ ____ 9

2.6 ການບັງຄັບໃຊ້ກົດໝາຍ ແລະ ນິຕິກຳໃນຂົງເຂດວຽກງານຫຼັກຊັບ ____ 9

2.7 ການຝຶກອົບຮົມ ແລະ ໂຄສະນາເຜີຍແຜ່ ____ 10

2.8 ການຮ່ວມມືສາກົນ ____ 11

III. ທິດທາງແຜນການ ປີ 2025 ____ 15

1. ຄາດຄະເນສະພາບຕະຫຼາດທຶນຂອງ ຕ່າງປະເທດ ____ 15

2. ຄາດຄະເນສະພາບຕະຫຼາດທຶນຂອງ ສປປ ລາວ ____ 15

3. ໜ້າວຽກຕົ້ນຕໍທີ່ຕ້ອງໄດ້ສຸມໃສ່ໃນປີ 2025 ____ 16

3.1 ນິຕິກຳທີ່ນຳໃຊ້ເຂົ້າໃນການຄຸ້ມຄອງວຽກງານຫຼັກຊັບ ແລະ ນະໂຍບາຍມະຫາພາກຕໍ່ວຽກງານຫຼັກຊັບ ____ 16

3.2 ການຄຸ້ມຄອງການອອກຈຳໜ່າຍຫຼັກຊັບໃນຕະຫຼາດຂັ້ນໜຶ່ງ ແລະ ການຄຸ້ມຄອງການເຄື່ອນ ໄຫວຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ ____ 16

3.3 ການຄຸ້ມຄອງຕະຫຼາດຫຼັກຊັບ ແລະ ການເຄື່ອນໄຫວໃນຕະຫຼາດຂັ້ນສອງ ____ 16

3.4 ການຄຸ້ມຄອງສະຖາບັນສື່ກາງດ້ານຫຼັກຊັບ ແລະ ນັກວິຊາຊີບທຸລະກິດຫຼັກຊັບ ____ 16

3.5 ການປົກປ້ອງຜູ້ລົງທຶນລາຍຍ່ອຍ ____ 17

3.6 ການໂຄສະນາເຜີຍແຜ່ ແລະ ໃຫ້ຄວາມຮູ້ແກ່ມວນຊົນ ____ 17

3.7 ການຮ່ວມມືສາກົນ ____ 18

## I. ສະພາບຕະຫຼາດທຶນ ໃນປີ 2024

### 1. ສະພາບຕະຫຼາດທຶນຂອງຕ່າງປະເທດ

ໃນປີ 2024 ຕະຫຼາດທຶນສາກົນປະສົບກັບສະພາບການທີ່ບໍ່ແນ່ນອນຢ່າງໜັກ ຊຶ່ງມາຈາກປັດໃຈທາງດ້ານເສດຖະກິດ, ບັນຫາເງິນເຟີ້ ແລະ ບັນຫາທາງການເມືອງ ແຕ່ເຖິງຢ່າງໃດກໍ່ຕາມສະພາບໂດຍລວມກໍ່ເຫັນວ່າ ຕະຫຼາດທຶນທົ່ວໂລກມີທ່າອ່ຽງປັບຕົວເພີ່ມຂຶ້ນ ເມື່ອທຽບກັບປີຜ່ານມາ ຊຶ່ງສາເຫດແມ່ນເນື່ອງມາຈາກ ການເຕີບໂຕຂອງເສດຖະກິດ ສ. ອາເມລິກາ, ການຟື້ນຕົວຂອງເສດຖະກິດ ຍີ່ປຸ່ນ, ການຟື້ນຕົວຂອງພາກການເງິນຂອງ ສປ. ຈີນ, ການຟື້ນຕົວຂອງເສດຖະກິດເອີຣົບ, ຜົນການດຳເນີນທຸລະກິດທີ່ດີຂອງບັນດາບໍລິສັດຈົດທະບຽນ ໂດຍສະເພາະແມ່ນ ກຸ່ມບໍລິສັດເຕັກໂນໂລຊີ ແລະ ກຸ່ມບໍລິສັດໃຫຍ່ໆ ທີ່ມີຜົນການດຳເນີນທຸລະກິດທີ່ດີເກີນຄາດ ກວ່າທີ່ນັກວິເຄາະຄາດການໄວ້.

### 2. ສະພາບຕະຫຼາດທຶນຂອງ ສປປ ລາວ

ປີ 2024 ແມ່ນເປັນອີກປີໜຶ່ງທີ່ມີຄວາມທ້າທາຍຂອງຕະຫຼາດທຶນລາວ ຈາກການທີ່ຍັງບໍ່ທັນມີວິສາຫະກິດເຂົ້າ ຈົດທະບຽນເພີ່ມເຕີມ ເຮັດໃຫ້ບັນຫາສະພາບຄ່ອງຂອງຕະຫຼາດຍັງຄົງເປັນບັນຫາທ້າທາຍຕະຫຼາດທຶນລາວ ແຕ່ເຖິງຢ່າງໃດກໍ່ຕາມ ປີ 2024 ກໍ່ກາຍເປັນປີທີ່ມີສີສັນ ແລະ ມີຄວາມຄຶກຄັກຂອງການເຄື່ອນໄຫວຂອງບາງຫຼັກຊັບທີ່ມີຄວາມພົ້ນເດັ່ນ ຄື ຮຸ້ນ BCEL ທີ່ມີມູນຄ່າການຊື້ ຂາຍສູງເຖິງ 23.26 ຕື້ກີບ ເພີ່ມຂຶ້ນ 45.20% ເມື່ອທຽບກັບປີ 2023 ໂດຍ ມີປັດໃຈມາຈາກຜົນການດຳເນີນທຸລະກິດຂອງບໍລິສັດທີ່ອອກມາດີ ເຊິ່ງໄດ້ກາຍເປັນປັດໃຈໜຶ່ງໃນການຊຸກຍູ້ການຊື້ ຂາຍຮຸ້ນ BCEL ໃຫ້ມີຄວາມຄຶກຄັກເພີ່ມຂຶ້ນ. ເຖິງສະພາບການໂດຍລວມຂອງຕະຫຼາດທຶນລາວ ຈະມີທ່າອ່ຽງປັບຕົວ ເພີ່ມຂຶ້ນ ຈາກປັດໃຈຊຸກຍູ້ຈາກການເພີ່ມ ຂຶ້ນຂອງມູນຄ່າການຊື້ ຂາຍຮຸ້ນ BCEL ກໍ່ຕາມ ແຕ່ເມື່ອສັງລວມສະພາບ ການໂດຍລວມຂອງການຊື້ ຂາຍຫຼັກຊັບໃນ ຕະຫຼາດຂັ້ນສອງ ແມ່ນຍັງຄົງບໍ່ຄຶກຄັກເທົ່າທີ່ຄວນ.

ຕະຫຼອດໄລຍະການເຄື່ອນໄຫວຊື້ ຂາຍຫຼັກຊັບໃນປີ 2024 ແມ່ນເຫັນວ່າ ນັກລົງທຶນພາຍໃນຍັງຄົງມີບົດບາດຕໍ່ກັບຕະຫຼາດທຶນລາວຫຼາຍກວ່ານັກລົງທຶນຕ່າງປະເທດ ໂດຍໃນປີ 2024 ນີ້ ນັກລົງທຶນພາຍໃນມີມູນຄ່າການຊື້ ຂາຍກວມ ເອົາ 53.65% ຂອງມູນຄ່າການຊື້ ຂາຍທັງໝົດ.

ເມື່ອສົມທຽບທິດທາງສາກົນ ແລະ ທິດທາງຂອງຕະຫຼາດທຶນລາວໃນປີ 2024 ແມ່ນເຫັນວ່າ ມີທ່າອ່ຽງໄປໃນທິດທາງດຽວກັນ ຄືໄປໃນທິດທາງການຄ່ອຍໆປັບຕົວເພີ່ມຂຶ້ນ ແລະ ສາມາດສູ້ຊົນຍູ້ໃຫ້ດັດຊະນີຂອງຕະຫຼາດໃຫ້ສາມາດປັບຕົວເພີ່ມຂຶ້ນໃນລະດັບທີ່ສູງເມື່ອທຽບກັບປີຜ່ານມາ.

ສຳລັບ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ (ສຄຄຊ) ຕໍ່ກັບບົດບາດໃນການຄຸ້ມຄອງ ແລະ ພັດທະນາຕະຫຼາດທຶນ ໃນປີ 2024 ແມ່ນຍັງຄົງສືບຕໍ່ໃນການໃຫ້ຄວາມຮູ້ແກ່ຜູ້ລົງທຶນ ແລະ ຕິດຕາມກວດກາການຊື້ ຂາຍຫຼັກຊັບຢ່າງໃກ້ຊິດ ເພື່ອຮັບປະກັນການປົກປ້ອງຜູ້ລົງທຶນ ແລະ ສົ່ງເສີມບັນຍາກາດການລົງທຶນໃນຫຼັກຊັບໃຫ້ມີສີສັນ ແລະ ປອດໄພສຳລັບ ຜູ້ລົງທຶນ. ພ້ອມດຽວກັນນັ້ນ ໃນປີ 2024 ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຍັງຄົງສືບຕໍ່ຊຸກຍູ້ວຽກງານ ການເງິນສີຂຽວຢ່າງຕໍ່ເນື່ອງໂດຍໃນປີນີ້ ແມ່ນສາມາດກຳນົດວິສາຫະກິດເປົ້າໝາຍໃນການອອກຮຸ້ນກູ້ສີຂຽວ 02 ບໍລິສັດ ທີ່ມີທ່າແຮງ ແລະ ຄວາມສົນໃຈໃນການອອກຮຸ້ນກູ້ສີຂຽວ.

## II. ການຄຸ້ມຄອງວຽກງານຫຼັກຊັບໃນປີ 2024

### 1. ອົງການຄຸ້ມຄອງວຽກງານຫຼັກຊັບ

### 1.1 ຄະນະກຳມະການຄຸ້ມຄອງຫຼັກຊັບ

ຄະນະກຳມະການຄຸ້ມຄອງຫຼັກຊັບ (ຄຄຊ) ໄດ້ເອົາໃຈໃສ່ປະຕິບັດໜ້າທີ່ຂອງຕົນ ໃນການຄຸ້ມຄອງ ແລະ ພັດທະນາຕະຫຼາດທຶນຂອງ ສປປ ລາວ ໃຫ້ມີປະສິດທິພາບ ໂປ່ງໃສ ແລະ ຍຸຕິທຳ. ການເຄື່ອນໄຫວໃນໄລຍະໜຶ່ງປີຜ່ານມາ ຄຄຊ ໄດ້ກຳນົດແນວທາງໃນການຄຸ້ມຄອງ, ພິຈາລະນາ ແລະ ຕິດຕາມກວດກາ ການເຄື່ອນໄຫວວຽກງານທີ່ຢູ່ພາຍໃຕ້ຄວາມຮັບຜິດຊອບຂອງຕົນຢ່າງໃກ້ຊິດ ໂດຍຜ່ານການພິຈາລະນາທາງເອກະສານ ແລະ ຜ່ານການຈັດກອງປະຊຸມຄົບຄະນະຂອງຄະນະກຳມະການຄຸ້ມຄອງຫຼັກຊັບ 02 ຄັ້ງ ເພື່ອພິຈາລະນາບາງບັນຫາທີ່ພົ້ນເດັ່ນ ແລະ ກຳນົດທິດທາງການຈັດຕັ້ງປະຕິບັດວຽກງານຈຸດສຸມໃນແຕ່ລະໄລຍະ. ພ້ອມນີ້, ໃນປີ 2024 ໄດ້ປັບປຸງຄະນະກຳມະການ ຄຄຊ ຈຳນວນ 05 ຄັ້ງ ເນື່ອງຈາກການປ່ຽນແປງດ້ານການຈັດຕັ້ງຂອງພາກສ່ວນກ່ຽວຂ້ອງ. ປັດຈຸບັນໂຄງປະກອບບຸກຄະລາກອນຂອງ ຄຄຊ ປະກອບມີ 11 ທ່ານ (ຕາມຮູບພາບ 1).

**ຮູບພາບ 1: ໂຄງປະກອບບຸກຄະລາກອນຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ**



### 1.2 ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ

ສຄຄຊ ປະຕິບັດພາລະບົດບາດໃນການເປັນກົງຈັກຊ່ວຍວຽກໃຫ້ແກ່ຄະນະ ຄຄຊ ໃນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງຫຼັກຊັບໃນ ສປປ ລາວ ຢ່າງລວມສູນ ເຊິ່ງໃນໄລຍະໜຶ່ງປີຜ່ານມາ ສຄຄຊ ໄດ້ເອົາໃຈໃສ່ປະຕິບັດວຽກງານຄຸ້ມຄອງຫຼັກຊັບດ້ວຍຄວາມຮັບຜິດຊອບສູງ ແລະ ມີຜົນສຳເລັດຫຼາຍດ້ານ. ສຄຄຊ ມີພະນັກງານ-ລັດຖະກອນທັງໝົດ ຈຳນວນ 49 ສະຫາຍ (ຍິງ 26 ສະຫາຍ), ໃນນີ້ ປະກອບດ້ວຍ ຄະນະ ສຄຄຊ 5 ສະຫາຍ (ຍິງ 3 ສະຫາຍ), ຄະນະພະແນກ 16 ສະຫາຍ (ຍິງ 6 ສະຫາຍ) ແລະ ວິຊາການ 28 ສະຫາຍ (ຍິງ 17 ສະຫາຍ).

**ຮູບພາບ 2: ໂຄງປະກອບບຸກຄະລາກອນ ຂອງຄະນະ ສຄຄຊ**




**ຮູບພາບ 3: ໂຄງປະກອບບຸກຄະລາກອນ ຂອງ ສຄຄຊ**



## 2. ຜົນສຳເລັດທີ່ພົ້ນເດັ່ນ ໃນປີ 2024

ໃນປີ 2024 ສຄຄຊ ໄດ້ເອົາໃຈໃສ່ເຄື່ອນໄຫວວຽກງານວິຊາສະເພາະຂອງຕົນຢ່າງຕັ້ງໜ້າ ໂດຍປະຕິບັດຕາມແຜນງານ, ໂຄງການ, ໜ້າວຽກທີ່ກຳນົດໄວ້ ພ້ອມທັງ ມີການຕິດຕາມ ແລະ ຖອດຖອນບົດຮຽນຕໍ່ການເຄື່ອນໄຫວວຽກງານຢ່າງໃກ້ຊິດ ເຮັດໃຫ້ສາມາດຍາດໄດ້ຜົນສຳເລັດໃນຫຼາຍດ້ານ ຊຶ່ງສາມາດສັງລວມລາຍລະອຽດໄດ້ດັ່ງນີ້:

### 2.1 ນິຕິກຳທີ່ນຳໃຊ້ເຂົ້າໃນການຄຸ້ມຄອງວຽກງານຫຼັກຊັບ ແລະ ນະໂຍບາຍມະຫາພາກຕໍ່ກັບວຽກງານຫຼັກຊັບ

#### 2.1.1 ນິຕິກຳທີ່ນຳໃຊ້ເຂົ້າໃນການຄຸ້ມຄອງວຽກງານຫຼັກຊັບ

ບົນພື້ນຖານການສົມທົບກັບພາກສ່ວນກ່ຽວຂ້ອງ ສຄຄຊ ໄດ້ສຳເລັດການປັບປຸງ ຍຸດທະສາດການພັດທະນາຕະຫຼາດທຶນ ຂອງ ສປປ ລາວ 10 ປີ (2021-2030) ແລະ ວິໄສທັດຮອດປີ 2035 ຊຶ່ງ ທ່ານ ນາຍົກລັດຖະມົນຕີ ໄດ້ອອກ ດຳລັດວ່າດ້ວຍ ການຮັບຮອງ ແລະ ປະກາດໃຊ້ຍຸດທະສາດດັ່ງກ່າວ ເປັນທີ່ຮຽບຮ້ອຍແລ້ວ. ນອກຈາກນັ້ນ, ສຄຄຊ ຍັງໄດ້ສຳເລັດການຄົ້ນຄວ້າ ສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍວ່າດ້ວຍຫຼັກຊັບ ທັງໝົດ ຈຳນວນ 08 ສະບັບ (ສ້າງໃໝ່ 05 ສະບັບ ແລະ ປັບປຸງ 03 ສະບັບ ເພື່ອເປັນບ່ອນອີງໃຫ້ແກ່ການຄຸ້ມຄອງວຽກງານຫຼັກຊັບໃນແຕ່ລະໄລຍະ. ອັນທີ່ພົ້ນເດັ່ນ ມີດັ່ງລຸ່ມນີ້:

**ຕາຕະລາງທີ 1: ສັງລວມລາຍຊື່ນິຕິກຳ ທີ່ສຳເລັດໃນປີ 2024**

| ລຳດັບ | ລາຍຊື່ນິຕິກຳ ທີ່ສຳເລັດ ໃນປີ 2024 |
|---|---|
| 1 | ຂໍ້ຕົກລົງວ່າດ້ວຍ ການແຕ່ງຕັ້ງ ຫົວໜ້າ, ຮອງຫົວໜ້າ ແລະ ເຈົ້າໜ້າທີ່ສືບສວນ-ສອບສວນກ່ຽວກັບວຽກງານຫຼັກຊັບ (ໃໝ່) |
| 2 | ຂໍ້ຕົກລົງວ່າດ້ວຍ ການອອກຈຳໜ່າຍຮຸ້ນ (ປັບປຸງ) |
| 3 | ຂໍ້ຕົກລົງວ່າດ້ວຍ ສະພາບໍລິຫານຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ (ປັບປຸງ) |
| 4 | ຂໍ້ຕົກລົງວ່າດ້ວຍ ການລາຍງານ ແລະ ການເປີດເຜີຍຂໍ້ມູນຂອງ ບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ (ປັບປຸງ) |
| 5 | ຂໍ້ຕົກລົງວ່າດ້ວຍ ກອງທຶນເພື່ອລົງທຶນໃນບໍລິສັດ ແລະ ກອງທຶນຮ່ວມລົງທຶນ (ໃໝ່) |
| 6 | ແຈ້ງການເລື່ອງ ການຝຶກອົບຮົມໃນຫົວຂໍ້ທີ່ກ່ຽວຂ້ອງກັບວຽກງານຫຼັກຊັບ ທີ່ບໍ່ແມ່ນຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບ (ໃໝ່) |
| 7 | ຄຳແນະນຳວ່າດ້ວຍ ການອອກຈຳໜ່າຍຮຸ້ນກູ້ ສີຂຽວ, ສັງຄົມ ແລະ ຍືນຍົງ (ໃໝ່) |
| 8 | ຄຳແນະນຳ ຄຸ້ມຄອງລະບົບໂປແກຼມຂອງ ສຄຄຊ (ໃໝ່) |

ຮອດປັດຈຸບັນ, ນິຕິກຳໃນຂົງເຂດວຽກງານຫຼັກຊັບ ປະກອບມີ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ແລະ ນິຕິກຳໃຕ້ກົດໝາຍສະບັບດັ່ງກ່າວ ທັງໝົດຈຳນວນ 106 ສະບັບ (ຕົວເລກຄິງທີ່ທຽບໃສ່ປີ 2023).

### 2.1.2 ນະໂຍບາຍມະຫາພາກຕໍ່ກັບວຽກງານຫຼັກຊັບ

ເພື່ອເປັນການດຶງດູດ ແລະ ຊຸກຍູ້ໃຫ້ມີການເຂົ້າຮ່ວມ ແລະ ປະກອບສ່ວນໃນຂົງເຂດວຽກງານຫຼາດທຶນໃຫ້ນັບມື້ນັບຫຼາຍຂຶ້ນ ສຄຄຊ ໄດ້ປະສານສົມທົບກັບ ກະຊວງການເງິນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງໃນການ ປຶກສາຫາລື ແລະ ຄົ້ນຄວ້າກ່ຽວກັບບັນຫາ, ຊອກຫາວິທີທາງແກ້ໄຂ ຕໍ່ກັບ ການໃຫ້ນະໂຍບາຍທາງດ້ານອາກອນ ແລະ ບໍ່ແມ່ນອາກອນ ທີ່ກ່ຽວຂ້ອງໃນຂົງເຂດການພັດທະນາວຽກງານຫຼັກຊັບໃນແຕ່ລະໄລຍະ ໂດຍສະເພາະແມ່ນການຄົ້ນຄວ້າທົບທວນການຈັດຕັ້ງປະຕິບັດນະໂຍບາຍທີ່ກ່ຽວຂ້ອງໃນໄລຍະຜ່ານມາ ແລະ ວາງທິດທາງການພັດທະນາຕະຫຼາດທຶນໃນຕໍ່ໜ້າ ຊຶ່ງຜ່ານການຄົ້ນຄວ້າຮ່ວມກັນຄືດັ່ງກ່າວ ແມ່ນເຫັນດີເປັນເອກະພາບໃນການປັບຫຼຸດອາກອນກຳໄລເພີ່ມຕື່ມ ທັງຮູບແບບການຫຼຸດອັດຕາອາກອນລົງ ແລະ ເພີ່ມໄລຍະເວລາໃນການຫຼຸດອັດຕາອາກອນຂຶ້ນຕື່ມ ແລະ ໄດ້ສຳເລັດການປັບປຸງນະໂຍບາຍດັ່ງກ່າວເຂົ້າໃສ່ ກົດໝາຍວ່າດ້ວຍອາກອນລາຍໄດ້ (ສະບັບປັບປຸງ) ທີ່ຈະນຳເຂົ້າຜ່ານກອງປະຊຸມສະພາແຫ່ງຊາດໃນກາງປີ 2025 ນີ້.

## 2.2 ການຄຸ້ມຄອງການອອກຈຳໜ່າຍຫຼັກຊັບໃນຕະຫຼາດຂັ້ນໜຶ່ງ ແລະ ການຄຸ້ມຄອງການເຄື່ອນໄຫວຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ

❖ **ການອອກຈຳໜ່າຍຫຼັກຊັບໃນຕະຫຼາດຂັ້ນໜຶ່ງ**

ໃນປີ 2024 ສຄຄຊ ໄດ້ພິຈາລະນາຄວາມພ້ອມຂອງບໍລິສັດ ແລະ ຕິດຕາມສະພາບຕະຫຼາດທຶນຢ່າງລະອຽດ ເຫັນວ່າປີນີ້ຍັງມີຄວາມສ່ຽງຈາກເສດຖະກິດທີ່ບໍ່ແນ່ນອນທັງພາຍໃນ ແລະ ຕ່າງປະເທດ. ບໍລິສັດຍັງຢູ່ໃນຂັ້ນຕອນຂອງການພັດທະນາລະບົບການບໍລິຫານ ແລະ ເສີມສ້າງຄວາມເຂັ້ມແຂງທາງການເງິນ ແລະ ການຄຸ້ມຄອງພາຍໃນ ເພື່ອກຽມຄວາມພ້ອມເຂົ້າສູ່ຕະຫຼາດທຶນໃນອະນາຄົດ. ສະນັ້ນ, ເພື່ອຄວາມໝັ້ນຄົງໃນໄລຍະຍາວ ແລະ ການເຕີບໂຕທີ່ຍືນຍົງ, ບໍລິສັດໄດ້ຕັດສິນໃຈບໍ່ລະດົມທຶນຜ່ານຕະຫຼາດຫຼັກຊັບໃນປີນີ້ ແລະ ຈະສຸມໃສ່ການຂະຫຍາຍຕົວຈາກພາຍໃນອົງກອນກ່ອນ.

**ຕາຕະລາງ 2: ສັງລວມການລະດົມທຶນຢູ່ພາຍໃນ ແລະ ຢູ່ຕ່າງປະເທດ ແຕ່ປີ 2010-2024**

| ປີ | ລະດົມທຶນ (ຕື້ກີບ) | ລະດົມທຶນ ຢູ່ຕ່າງປະເທດ (ຕື້ກີບ) | ລວມ (ຕື້ກີບ) |
|---|---|---|---|
| 2010 | 1,237 | - | 1,237 |
| 2012 | 1,611 | - | 1,611 |
| 2013 | 40 | - | 40 |
| 2014 | 240 | 1,625 | 1,865 |
| 2015 | 2,832 | - | 2,832 |
| 2016 | - | 2,558 | 2,558 |
| 2017 | 458 | 1,500 | 1,958 |
| 2018 | 69 | 5,349 | 5,418 |
| 2019 | 332 | 1,620 | 1,952 |
| 2020 | - | 494 | 494 |
| 2021 | - | 1,922 | 1,922 |
| 2022 | - | 4,219 | 4,219 |
| 2023 | 53 | 3,988 | 4,041 |
| 2024 | - | - | - |
| ລວມ | 6,871 | 23,276 | 30,147 |

ໂດຍລວມແລ້ວ, ນັບແຕ່ປີ 2010 - 2024 ຍອດສະສົມການລະດົມທຶນດ້ວຍການອອກຈຳໜ່າຍຫຼັກຊັບ ຢູ່ພາຍໃນ ແລະ ຕ່າງປະເທດ ລວມທັງໝົດ 30,147 ຕື້ກີບ (ຍັງບໍ່ລວມພັນທະບັດ) ກວມເອົາ 11.36% ຂອງ GDP ເຊິ່ງທຶນດັ່ງກ່າວ ໄດ້ນຳໃຊ້ເຂົ້າໃນການຂະຫຍາຍທຸລະກິດ ເປັນຕົ້ນແມ່ນ ສ້າງເຂື່ອນໄຟຟ້າ, ສ້າງປໍ້ານໍ້າມັນ, ສູນການຄ້າ, ຜະລິດ ຊີມັງ, ຜະລິດນໍ້າມັນປາມ, ຂະຫຍາຍທຸລະກິດເຊົ່າສິນເຊື່ອ ແລະ ການທະນາຄານ, ນຳໃຊ້ເປັນທຶນໝູນວຽນ ໃນການເຄື່ອນໄຫວ ທຸລະກິດ ແລະ ອື່ນໆ. ຮອດທ້າຍປີ 2024, ບໍລິສັດຈົດທະບຽນໃນ ຕະຫຼາດຫຼັກຊັບລາວ ມີທັງໝົດ 10 ແຫ່ງ (ລາຍຊື່ ບັນດາບໍລິສັດຈົດທະບຽນ ຢູ່ໃນເອກະສານຊ້ອນທ້າຍ 1).

**ຕາຕະລາງທີ 3: ສັງລວມສະພາບການອອກຈຳໜ່າຍພັນທະບັດລັດຖະບານ (ຮອດທ້າຍປີ 2024)**

| ລ/ດ | ລາຍການປີທີ່ອອກ | ຈຳນວນອອກ | ສະກຸນເງິນ | ຈຳນວນທີ່ຂາຍໄດ້ | ຄິດເປັນ % |
|---|---|---|---|---|---|
| 1 | 2018 | 1,000,000,000,000 | ກີບ | 1,000,000,000,000 | 100.00 |
| 2 | 2019 | 1,700,000,000,000 | | 1,700,000,000,000 | 100.00 |
| 3 | 2020-2022 | 1,500,000,000,000 | | 987,541,800,000 | 65.84 |
| 4 | | 1,700,000,000,000 | | 1,699,458,200,000 | 99.97 |
| 5 | 2023 | 1,000,000,000,000 | | 1,000,000,000,000 | 100.00 |
| 6 | | 1,500,000,000,000 | | 1,500,000,000,000 | 100.00 |
| 7 | | 1,500,000,000,000 | | 1,500,000,000,000 | 100.00 |
| 8 | | 1,500,000,000,000 | | 388,862,500,000 | 25.92 |
| 9 | 2024 | 1,200,000,000,000 | | 987,541,800,000 | 56.38 |
| 10 | 2020 | 50,000,000 | ໂດລາ | 50,000,000 | 100.00 |
| 11 | 2021 | 50,000,000 | | 23,294,500 | 46.59 |
| 12 | 2023 | 50,000,000 | | 50,000,000 | 100.00 |
| 13 | | 100,000,000 | | 100,000,000 | 100.00 |
| 14 | 2024 | 100,000,000 | | 45,278,200 | 45.28 |
| 15 | 2023 | 3,000,000,000 | ບາດ | 3,000,000,000 | 100.00 |
| 16 | 2024 | 3,500,000,000 | | 2,151,938,000 | 61.48 |
| 17 | | 4,000,000,000 | | 4,000,000,000 | 100.00 |
| **ລວມທັງໝົດ** | | **12,600,000,000,000** | **ກີບ** | **10,452,399,500,000** | **82.96** |
| **ລວມທັງໝົດ** | | **350,000,000** | **ໂດລາ** | **268,572,700** | **76.74** |
| **ລວມທັງໝົດ** | | **10,500,000,000** | **ບາດ** | **9,151,938,000** | **87.16** |

ໝາຍເຫດ: ຄິດເປັນ % ແມ່ນທຽບຈຳນວນທີ່ຂາຍພັນທະບັດໄດ້ ກັບ ຈຳນວນອອກພັນທະບັດໃນປີນັ້ນໆ.

❖ **ການຄຸ້ມຄອງການເຄື່ອນໄຫວຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ**

ສຄຄຊ ເອົາໃຈໃສ່ໃນການຄຸ້ມຄອງ ແລະ ຕິດຕາມ ການເຄື່ອນໄຫວຂອງບໍລິສັດອອກຈຳໜ່າຍ ແລະ ບໍລິສັດຈົດທະບຽນ ດ້ວຍການຕິດຕາມການລາຍງານ ແລະ ການເປີດເຜີຍຂໍ້ມູນ, ການຈ່າຍເງິນປັນຜົນ ແລະ ການນຳໃຊ້ທຶນ ແລະ ລົງຕິດຕາມ ແລະ ປະເມີນການດຳເນີນກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2024 ຂອງບໍລິສັດຈົດທະບຽນ 10 ແຫ່ງ ລວມຈຳນວນ 11 ຄັ້ງ (ກອງປະຊຸມສາມັນ 10 ຄັ້ງ ແລະ ວິສາມັນ 1 ຄັ້ງ) ແລະ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ບໍລິສັດຈົດທະບຽນ ສຄຄຊ ໄດ້ຊຸກຍູ້ໃຫ້ບັນດາບໍລິສັດຈົດທະບຽນເຂົ້າຮ່ວມຝຶກອົບຮົມທີ່ກ່ຽວຂ້ອງກັບການໃຫ້ຄວາມຮູ້ທາງດ້ານມາດຕະຖານສາກົນດ້ານການລາຍງານການເງິນ (IFRS) ແລະ ຄົ້ນຄວ້າຂັ້ນແຜນຂອງຕົນເອງເພື່ອກ້າວໄປສູ່ການຈັດຕັ້ງປະ

ຕິບັດມາດຕະຖານ IFRS ໃນປີ 2026. ພ້ອມນັ້ນ, ສຄຄຊ ໄດ້ຊຸກຍູ້ ແລະ ຕິດຕາມ ຕະຫຼາດຫຼັກຊັບລາວ ໃນການຄົ້ນຄວ້າ ແລະ ຈັດຕັ້ງປະຕິບັດຄວາມຕ້ອງການທາງດ້ານທຸລະກິດ (Business requirement) ໃນການສ້າງ Platform ສໍາລັບ CG Scorecard ໃນຮູບແບບອອນລາຍ ທີ່ເປັນມາດຕະຖານ ພ້ອມທັງຊຸກຍູ້ ແລະ ຕິດຕາມການສ້າງຄູ່ມືແນະນໍາການປະເມີນການຄຸ້ມຄອງບໍລິຫານຂອງບໍລິສັດຈົດທະບຽນໃນ ຕະຫຼາດຫຼັກຊັບລາວ ຄຽງຄູ່ກັບການສ້າງ Platform ດັ່ງກ່າວ ແລະ ຕິດຕາມຜົນການປະເມີນການຈັດຕັ້ງປະຕິບັດຄໍາແນະນໍາວ່າດ້ວຍການຄຸ້ມຄອງບໍລິຫານ CG Scorecard ຂອງບໍລິສັດຈົດທະບຽນ 10 ແຫ່ງ.

## 2.3 ການຄຸ້ມຄອງຕະຫຼາດຫຼັກຊັບ ແລະ ການເຄື່ອນໄຫວໃນຕະຫຼາດຂັ້ນສອງ

### ❖ ການຄຸ້ມຄອງຕະຫຼາດຫຼັກຊັບ

ສຄຄຊ ໄດ້ເອົາໃຈໃສ່ຄຸ້ມຄອງ, ຕິດຕາມ ແລະ ກວດກາການເຄື່ອນໄຫວຂອງ ຕະຫຼາດຫຼັກຊັບລາວ ຢ່າງໃກ້ຊິດ ດ້ວຍການກວດກາຕາມເອກະສານ ປະຈໍາເດືອນ, ໄຕມາດ, ຫົກເດືອນ ແລະ ປີ ຢ່າງເປັນປົກກະຕິ ແລະ ລົງກວດກາກັບທີ່ປະຈໍາປີ 2024 ຈໍານວນ 1 ຄັ້ງ ໂດຍລົງເລິກ ກວດກາລະບົບການຊື້ຂາຍ, ການເກັບຮັກສາຂໍ້ມູນ, ເອກະສານລາຍງານການເງິນ ແລະ ການເຄື່ອນໄຫວວຽກງານຂອງ ຕະຫຼາດຫຼັກຊັບລາວ. ສຄຄຊ ໄດ້ຍຶດໝັ້ນຫຼັກການປົກປ້ອງຜູ້ລົງທຶນ ແລະ ສົ່ງເສີມ ການລົງທຶນທີ່ຍຸຕິທໍາ ແລະ ສະເໝີພາບຂອງຜູ້ລົງທຶນ ດ້ວຍການຕິດຕາມ ແລະ ກວດກາການຊື້ຂາຍຫຼັກຊັບ ຢ່າງເປັນປົກກະຕິ, ຄວບຄູ່ກັບການຊຸກຍູ້ໃຫ້ຜູ້ມີສ່ວນຮ່ວມໃຫ້ຄວາມຮູ້ຜູ້ລົງທຶນທີ່ລົງທຶນໃນຕະຫຼາດທຶນ ເພື່ອຮັບປະກັນການດໍາເນີນງານຂອງຕະຫຼາດ ໃຫ້ມີສະຖຽນລະພາບ ແລະ ປົກປ້ອງຜູ້ລົງທຶນ.

ນອກຈາກນີ້, ສຄຄຊ ຍັງໄດ້ຄົ້ນຄວ້າການສ້າງກະດານຮອງ ເພື່ອຮອງຮັບວິສາຫະກິດຂະໜາດນ້ອຍ ແລະ ກາງ ພ້ອມທັງເອົາໃຈໃສ່ຊຸກຍູ້ສົ່ງເສີມວຽກງານ ສີຂຽວ, ສັງຄົມ ແລະ ຍືນຍົງ ຢູ່ ຕະຫຼາດທຶນລາວ ໂດຍໄດ້ເຊັນບົດບັນທຶກຄວາມເຂົ້າໃຈ (MOU) ລະຫວ່າງ ສຄຄຊ ແລະ ສະຖາບັນເຕີບໂຕສີຂຽວ (GGGI) ເພື່ອຊຸກຍູ້ສົ່ງເສີມການອອກຈໍາໜ່າຍຮຸ້ນກູ້ສີຂຽວ ຢູ່ ສປປ ລາວ ແລະ ໄດ້ຄົ້ນຄວ້າຄໍາແນະນໍາວ່າດ້ວຍການອອກຈໍາໜ່າຍຮຸ້ນກູ້ດັ່ງກ່າວ.

### ❖ ການຄຸ້ມຄອງການເຄື່ອນໄຫວໃນຕະຫຼາດຂັ້ນສອງ

ດັດຊະນີ ຕະຫຼາດຫຼັກຊັບລາວ ປີ 2024 ປິດຢູ່ທີ່ 1,150.07 ຈຸດ ເພີ່ມຂຶ້ນ 6.55% ທຽບໃສ່ ທ້າຍປີ 2023. ມູນຄ່າການຊື້ຂາຍທັງໝົດ ໃນປີ ຈໍານວນ 31.07 ຕື້ກີບ ເພີ່ມຂຶ້ນ 25% ທຽບໃສ່ປີຜ່ານມາ. ການເຄື່ອນໄຫວຊື້ຂາຍຂອງຜູ້ລົງທຶນຕ່າງປະເທດ ກວມເອົາ 46.35% ຂອງມູນຄ່າການຊື້ຂາຍທັງໝົດ ຊຶ່ງໃນນັ້ນ, ການເຄື່ອນໄຫວຂອງຮຸ້ນ BCEL, EDL-GEN ແລະ MHTL ມີການຊື້ຂາຍຢ່າງຕໍ່ເນື່ອງ ໃນຕະຫຼາດຫຼັກຊັບລາວ.

**ແຜນວາດ 1: ມູນຄ່າການຊື້ຂາຍຮຸ້ນ ທຽບກັບ ດັດສະນີຂອງ ຕະຫຼາດຫຼັກຊັບ (11 ມັງກອນ 2011 – 20 ທັນວາ 2024)**

ຫົວໜ່ວຍ: ລ້ານກີບ



**ແຜນວາດ 2: ການເໜັງຕີງລາຄາຮຸ້ນ EDL GEN, BCEL, LWPC, PTL, SVN, PCD, LCC, MHTL LAT, VCL ແລະ LALCO (04 ມັງກອນ ຫາ 20 ທັນວາ 2024)**

ຫົວໜ່ວຍ: ລ້ານກີບ




## 2.4 ການຄຸ້ມຄອງສະຖາບັນສື່ກາງດ້ານຫຼັກຊັບ ແລະ ນັກວິຊາຊີບທຸລະກິດຫຼັກຊັບ

ສຄຄຊ ໄດ້ເອົາໃຈໃສ່ຄຸ້ມຄອງ, ຕິດຕາມ ກວດກາ ຫົວໜ່ວຍດັ່ງກ່າວ ຢ່າງເປັນປົກກະຕິ ດ້ວຍຮູບການກວດກາທາງເອກະສານປະຈຳເດືອນ, ໄຕມາດ, 6 ເດືອນຕົ້ນປີ ແລະ ປະຈຳປີ. ນອກນັ້ນ, ຍັງໄດ້ລົງກວດກາກັບທີ່ກ່ຽວກັບວຽກງານ AML/CFT ຂອງຫົວໜ່ວຍທີ່ມີໜ້າທີ່ລາຍງານ ຈຳນວນ 3 ຄັ້ງ ແລະ ສຳເລັດການເຮັດວຽກຮ່ວມກັບ ສຳນັກງານຂໍ້ມູນຕ້ານການຟອກເງິນ ໃນການແກ້ໄຂຂໍ້ຄົງຄ້າງໃນການຈັດຕັ້ງປະຕິບັດວຽກງານການປະເມີນຄວາມສ່ຽງດ້ານການຟອກເງິນ (AML/CFT) ໃນວຽກງານຫຼັກຊັບ; ສຳເລັດການລົງກວດກາປົກກະຕິບໍລິສັດຫຼັກຊັບ 4 ແຫ່ງ ປະຈຳປີ 2024 ຈຳນວນ 4 ຄັ້ງ, ສຳເລັດການຮັບຮອງຄະນະອຳນວຍການ ແລະ ສະພາບໍລິຫານຂອງ ບໍລິສັດຫຼັກຊັບ 2 ແຫ່ງ. ພ້ອມນີ້, ໄດ້ສຳເລັດລົງກວດກາການຍົກຍ້າຍທີ່ຕັ້ງບໍລິສັດຫຼັກຊັບ 3 ແຫ່ງ ຈຳນວນ 3 ຄັ້ງ ພ້ອມທັງ ອອກໃບອະນຸຍາດດຳເນີນທຸລະກິດບໍລິສັດຫຼັກຊັບ (ສະບັບປັບປຸງ) ໃຫ້ແກ່ 03 ບໍລິສັດຫຼັກຊັບດັ່ງກ່າວ; ສຳເລັດບົດຄົ້ນຄວ້າສ້າງລະບົບທຸລະກຳການຢືມ ແລະ ໃຫ້ຢືມຫຼັກຊັບ (Securities borrowing and lending: SBL) ຫລື Margin trade; ສຳເລັດການຄົ້ນຄວ້າຮູບແບບສ້າງຕັ້ງສະມາຄົມຕະຫຼາດທຶນລາວ ແລະ ແຜນການເຄື່ອນໄຫວເພື່ອຊຸກຍູ້ການສ້າງຕັ້ງສະມາຄົມດັ່ງກ່າວ; ໄດ້ເອົາໃຈໃສ່ຊຸກຍູ້ການຄົ້ນຄວ້າພັດທະນາລະບົບ Mobile Trading App ໂດຍໄດ້ສຳເລັດການປະຊຸມຮ່ວມກັບ ຕະຫຼາດຫຼັກຊັບ ລາວ, ບໍລິສັດຫຼັກຊັບ ແລະ ຜູ້ພັດທະນາລະບົບດັ່ງກ່າວ ຈຳນວນ 5 ຄັ້ງ ປັດຈຸບັນ,ຍັງຢູ່ໃນຂັ້ນຕອນການ ເຊື່ອມຕໍ່ລະບົບ ລະຫວ່າງ ຜູ້ພັດທະນາລະບົບກັບ ຕລຊລ; ໄດ້ຈັດປະຊຸມ ເພື່ອຊຸກຍູ້ການຈັດຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບ ສຳລັບຜູ້ບໍລິຫານກອງທຶນ ຈຳນວນ 3 ຄັ້ງ; ໄດ້ສຳເລັດການຄົ້ນຄວ້າກ່ຽວກັບກອງທຶນເພື່ອການລົງທຶນໃນບໍລິສັດ (Private Equity Fund: PE) ແລະ ກອງທຶນຮ່ວມລົງທຶນ (Venture Capital: VC) ແລະ ສຳເລັດການຈັດເສວະນາຮ່ວມກັບທະນາຄານພັດທະນາອາຊີ ກ່ຽວກັບຄຸນນະພາບຂອງບົດກວດສອບພາຍນອກ. ນອກຈາກນີ້, ຍັງໄດ້ສາເລັດການຄົ້ນຄວ້າ ແລະ ອອກໃບຮັບຮອງບໍລິສັດກວດສອບໃນວຽກງານຫຼັກຊັບ 1 ແຫ່ງ, ສຳເລັດການຮັບຮອງນັກວິຊາທຸລະກິດຫຼັກຊັບໃໝ່ ຈຳນວນ 7 ທ່ານ, ຕໍ່ອາຍຸ 15 ທ່ານ, ຕໍ່ອາຍຸໃບຮັບຮອງເປັນບໍລິສັດປະເມີນມູນຄ່າຊັບສິນ 1 ແຫ່ງ ແລະ ຕໍ່ອາຍຸໃບຮັບຮອງເປັນທະນາຄານດູແລຊັບສິນ 1 ແຫ່ງ.

ຮອດປັດຈຸບັນ, ມີຈຳນວນສະຖາບັນສີກາງດ້ານຫຼັກຊັບ ແລະ ຊົມລົມທີ່ກ່ຽວຂ້ອງທີ່ໄດ້ຮັບຮອງຈາກ ສຄຄຊ ໃຫ້ເຂົ້າມາເຄື່ອນໄຫວໃນຂົງເຂດວຽກງານຫຼັກຊັບ ລວມທັງໝົດມີ 32 ແຫ່ງ (ບໍລິສັດຫຼັກຊັບ 04 ແຫ່ງ, ບໍລິສັດກວດສອບ 04 ແຫ່ງ, ບໍລິສັດປະເມີນມູນຄ່າຊັບສິນ 08 ແຫ່ງ, ບໍລິສັດຈັດລຳດັບຄວາມໜ້າເຊື່ອຖື 01 ແຫ່ງ, ທະນາຄານດູແລຊັບສິນ 04 ແຫ່ງ, ຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ 04 ແຫ່ງ, ທະນາຄານຕົວແທນເພື່ອການຊຳລະ-ສະສາງໃນວຽກງານຫຼັກຊັບ 04 ແຫ່ງ, ຫ້ອງການຜູ້ຕາງໜ້າບໍລິສັດຫຼັກຊັບຕ່າງປະເທດ 01 ແຫ່ງ, ຊົມລົມບໍລິສັດຫຼັກຊັບ ແລະ ນັກວິຊາຊີບທຸລະກິດຫຼັກຊັບ 01 ແຫ່ງ ແລະ ຊົມລົມບໍລິສັດປະເມີນມູນຄ່າຊັບສິນ 01 ແຫ່ງ). ຄຽງຄູ່ກັນນັ້ນ, ນັກວິຊາຊີບທີ່ຖືກຮັບຮອງໃຫ້ເຄື່ອນໄຫວໃນຂົງເຂດວຽກງານຫຼັກຊັບ ທັງໝົດ 64 ທ່ານ ປະກອບມີ: ນັກວິຊາຊີບທຸລະກິດຫຼັກຊັບ 21 ທ່ານ, ນັກວິຊາຊີບກວດສອບ 22 ທ່ານ ແລະ ນັກວິຊາຊີບປະເມີນມູນຄ່າຊັບສິນ 21 ທ່ານ.

### 2.5 ການປົກປ້ອງຜູ້ລົງທຶນລາຍຍ່ອຍ

ໂດຍປະຕິບັດຕາມຄຳສັ່ງຂອງ ທ່ານ ນາຍົກລັດຖະມົນຕີ ກ່ຽວກັບການປັບປຸງຕົວຊີ້ວັດຂອງບົດລາຍງານການ ດຳເນີນທຸລະກິດ ຂອງ ສປປ ລາວ ເລກທີ 02/ນຍ[1] ລົງວັນທີ 01 ກຸມພາ 2018 ຕິດພັນກັບການຄຸ້ມຄອງວຽກງານຫຼັກຊັບ, ໃນໄລຍະຜ່ານມາ ສຄຄຊ ໄດ້ເອົາໃຈໃສ່ໃນການສ້າງ ແລະ ປັບປຸງນິຕິກຳທີ່ກ່ຽວຂ້ອງ ສຳເລັດການສ້າງ ແລະ ປັບປຸງນິຕິກຳໃນຂົງເຂດວຽກງານຫຼັກຊັບ ທີ່ກ່ຽວຂ້ອງກັບການປົກປ້ອງຜູ້ລົງທຶນລາຍຍ່ອຍທີ່ຕິດພັນກັບການປັບປຸງຕົວຊີ້ວັດດັ່ງກ່າວ ຈຳນວນໜຶ່ງ. ພ້ອມນີ້, ກໍ່ໄດ້ຕິດຕາມສານປະຊາຊົນສູງສຸດ ໃນການປັບປຸງກົດໝາຍວ່າການດຳເນີນຄະດີແພ່ງ ແລະ ກົດໝາຍວ່າດ້ວຍຄ່າທຳນຽມສານ ຕໍ່ເນື້ອໃນທີ່ຕິດພັນກັບວຽກງານຫຼັກຊັບ.

ຄຽງຄູ່ກັນນີ້, ສຄຄຊ ຍັງໄດ້ສຳເລັດການຕິດຕາມກວດກາການເຄື່ອນໄຫວຂອງບໍລິສັດນອກວັດຖຸປະສົງຈຳນວນໜຶ່ງ ພ້ອມທັງ, ປະສານຫາພາກສ່ວນກ່ຽວຂ້ອງ ເພື່ອຕິດຕາມ ແລະ ພິຈາລະນາດຳເນີນການແກ້ໄຂ ແລະ ສະໜອງຂໍ້ມູນທີ່ຈຳເປັນຕິດພັນກັບວຽກງານຫຼັກຊັບໃຫ້ແກ່ການດຳເນີນຄະດີຂອງເຈົ້າໜ້າທີ່ຕຳຫຼວດ. ພ້ອມນີ້, ກໍ່ໄດ້ສືບຕໍ່ເປີດນຳໃຊ້ຊ່ອງທາງໃນການຮ້ອງຟ້ອງ ຫຼື ແຈ້ງຄວາມຈາກສັງຄົມ ໃນກໍລະນີສົງໃສວ່າມີການລະເມີດລະບຽບກົດໝາຍໃນຂົງເຂດວຽກງານຫຼັກຊັບ ໂດຍສາມາດຮ້ອງຟ້ອງ ຫຼື ແຈ້ງຄວາມຜ່ານ 04 ຊ່ອງທາງ ດັ່ງລຸ່ມນີ້:

1) ມາຮ້ອງຟ້ອງ ຫຼື ແຈ້ງຄວາມດ້ວຍຕົນເອງ ຢູ່ທີ່ຕຶກຫ້ອງການ ສຄຄຊ;
2) ຮ້ອງຟ້ອງ ຫຼື ແຈ້ງຄວາມຜ່ານທາງໄປສະນີ;
3) ຮ້ອງຟ້ອງ ຫຼື ແຈ້ງຄວາມຜ່ານທາງໂທລະສັບ (ເບີໂທສາຍດ່ວນ 1602);
4) ຮ້ອງຟ້ອງ ຫຼື ແຈ້ງຄວາມຜ່ານທາງ ອີເມວ ແລະ ເວັບໄຊທ໌ຂອງ ຄຄຊ (www.lsc.gov.la).




### 2.6 ການບັງຄັບໃຊ້ກົດໝາຍ ແລະ ນິຕິກຳໃນຂົງເຂດວຽກງານຫຼັກຊັບ

ໃນປີ 2024 ສຄຄຊ ໄດ້ເອົາໃຈໃສ່ຕິດຕາມ ແລະ ຈັດຕັ້ງປະຕິບັດກົດໝາຍ ແລະ ນິຕິກຳໃຕ້ກົດໝາຍທີ່ກ່ຽວຂ້ອງກັບວຽກງານຫຼັກຊັບ ເຊິ່ງຜ່ານການຕິດຕາມ, ກວດກາ ເຫັນວ່າ: ມີບໍລິສັດຈົດທະບຽນ 1 ບໍລິສັດ ໄດ້ເຄື່ອນໄຫວບໍ່ສອດຄ່ອງກັບ ກົດໝາຍວ່າ ດ້ວຍຫຼັກຊັບ ແລະ ລະບຽບການກ່ຽວຂ້ອງກັບວຽກງານຫຼັກຊັບ ຊຶ່ງ ສຄຄຊ ໄດ້ຄົ້ນຄວ້າ ແລະ ປະຕິບັດມາດຕະການປັບໃໝຕໍ່ ບໍລິສັດຈົດທະບຽນດັ່ງກ່າວ ຈຳນວນ 1 ກໍລະນີ. ພ້ອມນີ້, ສຄຄຊ ໄດ້ປະສານສົມທົບກັບເຈົ້າໜ້າທີ່ຕຳຫຼວດ ເພື່ອຄົ້ນຄວ້າປະຕິບັດມາດຕະການຕໍ່ກັບ ບໍລິສັດທີ່ເຄື່ອນໄຫວນອກວັດຖຸປະສົງ 2 ແຫ່ງ ທີ່ໄດ້ມີການລະເມີດ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງໃນຂົງເຂດວຽກງານຫຼັກຊັບ ພ້ອມທັງຕິດຕາມການເຄື່ອນໄຫວຂອງບໍລິສັດອີກ 1 ແຫ່ງທີ່ສົງໃສວ່າມີການເຄື່ອນໄຫວທີ່ຂັດກັບກົດໝາຍ ແລະ ລະບຽບການໃນຂົງເຂດວຽກງານຫຼັກຊັບ.

---

[1] ຄຳສັ່ງເລກທີ 02/ນຍ: ຄຳສັ່ງຂອງທ່ານ ນາຍົກລັດຖະມົນຕີ ວ່າດ້ວຍການປັບປຸງບັນດາລະບຽບການ ແລະ ກົນໄກປະສານງານໃນການດຳເນີນທຸລະກິດຢູ່ ສປປ ລາວ ສະບັບເລກທີ 02/ນຍ, ລົງວັນທີ 1 ກຸມພາ 2018.

## 2.7 ການຝຶກອົບຮົມ ແລະ ໂຄສະນາເຜີຍແຜ່

ສຄຄຊ ໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດວຽກງານການຈັດຝຶກອົບຮົມ ແລະ ໂຄສະນາເຜີຍແຜ່ ໃຫ້ຄວາມຮູ້ດ້ານວຽກງານຫຼັກຊັບແກ່ມວນຊົນ ດ້ວຍຫຼາຍຮູບການ ໃນປີ 2024 ໄດ້ມີຜົນສຳເລັດຫຼາຍດ້ານຄື: ໄດ້ຈັດຕັ້ງປະຕິບັດວຽກງານຝຶກອົບຮົມ ຈຳນວນ 10 ຫົວຂໍ້/11 ຄັ້ງ ຊຶ່ງມີຜູ້ເຂົ້າຮ່ວມ ຈຳນວນ 536 ທ່ານ, ຈັດຕັ້ງປະຕິບັດວຽກໂຄສະນາເຜີຍແຜ່ ໃນຮູບແບບຮູບແບບກັບທີ່ ແລະ ອອນລາຍ ຈຳນວນ 5 ຫົວຂໍ້/8 ຄັ້ງ ຊຶ່ງມີຜູ້ເຂົ້າຮ່ວມທັງໝົດ ຈຳນວນ 555 ທ່ານ.

ນອກຈາກນັ້ນ, ສຄຄຊ ກໍ່ໄດ້ເຜີຍແຜ່ຜ່ານສື່ຂອງ ສຄຄຊ ເປັນຕົ້ນແມ່ນ Podcast ຈຳນວນ 4 ຫົວຂໍ້, ກາຕູນສັ້ນ (Animation) ຈຳນວນ 4 ຫົວຂໍ້, ສາລະຕະຫຼາດທຶນ ຈຳນວນ 11 ຫົວຂໍ້, Infographic ຈຳນວນ 12 ຫົວຂໍ້, ສະກຸບພິເສດ ຈຳນວນ 2 ຫົວຂໍ້ ແລະ ຂ່າວ ຈຳນວນ 45 ຂ່າວ, ຂ່າວໂຄສະນາ ແລະ ປະຊາສຳພັນ ຈຳນວນ 13 ຂ່າວ.

ຮູບພາບ 5: ບັນຍາກາດການຈັດຝຶກອົບຮົມ




ຮູບພາບ 6: ບັນຍາກາດການລົງໂຄສະນາເຜີຍແຜ່ ວຽກງານຕະຫຼາດທຶນ




ຮູບພາບ 7: ຜະລິດສື່ໂຄສະນາຜ່ານລາຍການໂທລະພາບ "ເສັ້ນທາງສູ່ຕະຫຼາດທຶນລາວ" ແລະ ສື່ອອນລາຍ



## 2.8 ການຮ່ວມມືສາກົນ

ສຄຄຊ ໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດການເຄື່ອນໄຫວວຽກງານພົວພັນຮ່ວມມືກັບສາກົນ ໃນຮູບແບບສອງຝ່າຍ, ຫຼາຍຝ່າຍ ແລະ ກັບອົງການຈັດຕັ້ງສາກົນ ຕາມແນວທາງນະໂຍບາຍຂອງພັກ-ລັດວາງອອກ ເພື່ອຍາດແຍ່ງການຊ່ວຍເຫຼືອທາງດ້ານວິຊາການ ແລະ ທຶນສະໜັບສະໜູນ ເພື່ອຖອດຖອນບົດຮຽນ, ກໍ່ສ້າງບຸກຄະລາກອນ, ແລກປ່ຽນຂໍ້ມູນຂ່າວສານ ແລະ ພັດທະນາວຽກງານຕະຫຼາດທຶນ. ໃນຮູບແບບສອງຝ່າຍ, ສຄຄຊ ໄດ້ຮ່ວມມືກັບ ຄຄຊ ສປ.ຈີນ, ຫວຽດນາມ, ໄທ, ສະຖາບັນ IOD ໄທ, ສະຖາບັນ CPA Australia, ຕະຫຼາດຫຼັກຊັບໄທ ແລະ ລັດຖະບານລຸກຊຳບວກ ຢ່າງເປັນປົກກະຕິ. ອັນພົ້ນເດັ່ນ, ໄດ້ສຳເລັດການຈັດກອງປະຊຸມສອງຝ່າຍ ຄັ້ງທີ 12 ຮ່ວມກັບ ຄຄຊ ສສ. ຫວຽດນາມ ແລະ ປະຊຸມສອງຝ່າຍ ຄັ້ງທີ 2 ຮ່ວມກັບ ຄຄຊ ກຳປູເຈຍ ພ້ອມທັງ ສຳມະນາ 4 ຫົວຂໍ້ ຄື: 1) ການສົ່ງເສີມຄວາມຮູ້ ທາງດ້ານວຽກງານຫຼັກຊັບ, 2) ການສ້າງຕັ້ງບໍລິສັດຈັດລຳດັບຄວາມໜ້າເຊື່ອຖື, 3) ການຂະຫຍາຍ ແລະ ຄຸ້ມຄອງຜູ້ລົງທຶນ ພາຍໃນ ແລະ ຕ່າງປະເທດ ແລະ 4) ການຈັດຕັ້ງປະຕິບັດມາດຕະການທາງບໍລິຫານ ກ່ຽວກັບວຽກງານຫຼັກຊັບ; ສຳເລັດການຈັດກອງປະຊຸມສຳມະນາທາງອອນລາຍ ຮ່ວມກັບ ຄຄຊ ສປ. ຈີນ 2 ຫົວຂໍ້ ຄື: 1) ການພັດທະນາພັນທະບັດສີຂຽວ, ສັງຄົມ ແລະ ຍືນຍົງ ແລະ 2) ການຊຸກຍູ້ຜູ້ອອກຈຳໜ່າຍຫຼັກຊັບ ແລະ ຜູ້ລົງທຶນ ເຂົ້າມາມີສ່ວນຮ່ວມໃນກະດານຮອງ ໃນຕະຫຼາດຫຼັກຊັບ ເປັນຕົ້ນແມ່ນ ນະໂຍບາຍຂອງລັດຖະບານ ໃນການຊຸກຍູ້ສົ່ງເສີມຕະຫຼາດທຶນ; ສຳເລັດ ການນຳສົ່ງພະນັກງານ ສຄຄຊ ໄປຝຶກອົບຮົມຢູ່ ສສ. ຫວຽດນາມ ຈຳນວນ 2 ຄັ້ງ, 10 ເທື່ອຄົນ ໃນ 4 ຫົວຂໍ້ ຄື: 1) ການຄຸ້ມຄອງ ແລະ ກວດກາ ບໍລິສັດຈົດທະບຽນ, 2) ການລາຍງານ ແລະ ຄຸ້ມຄອງລະບົບ, 3) ການປະເມີນຮອບດ້ານວຽກງານພັດທະນາຕະຫຼາດທຶນ ແລະ ການກຳນົດຍຸດທະສາດການພັດທະນາຕະຫຼາດທຶນ ແລະ 4) ການຫັນລັດວິສາຫະກິດ (SOEs); ສຳເລັດການນຳສົ່ງພະນັກງານ ເຂົ້າຮ່ວມກອງປະຊຸມຕິດພັນກັບວຽກງານ ອົງການຄຸ້ມຄອງວຽກງານຫຼັກຊັບສາກົນ (IOSCO) ແລະ ວຽກງານຕະຫຼາດທຶນ ຢູ່ ປະເທດ ສະເປນ, ສ.ອາເມລິກາ, ສິງກະໂປ, ຍີ່ປຸ່ນ, ສສ.ຫວຽດນາມ ແລະ ມາເລເຊຍ ຈຳນວນ 22 ເທື່ອຄົນ.

**ຮູບພາບ 8: ກອງປະຊຸມສອງຝ່າຍກັບ ຄຄຊ ສສ. ຫວຽດນາມ**



ຮູບພາບ 9: ກອງປະຊຸມສອງຝ່າຍກັບ ຄຄຊ ກໍາປູເຈຍ




ຮູບພາບ 10 : ກອງປະຊຸມສໍາມະນາທາງອອນລາຍ ກັບ ຄຄຊ ສປ. ຈີນ




ໃນຮູບແບບຫຼາຍຝ່າຍ, ໄດ້ສໍາເລັດການເປັນເຈົ້າພາບຈັດກອງປະຊຸມພັດທະນາຕະຫຼາດທຶນອາຊຽນ (ASEAN Capital Markets Forum: : ACMF Deputies meeting) ຄັ້ງທີ 1 ແລະ 2 ປະຈໍາປີ 2024, ກອງປະຊຸມ ACMF Chairs ຄັ້ງທີ 40 ແລະ 41, ງານສະເຫຼີມສະຫຼອງ ACMF ຄົບຮອບ 20 ປີ, ກອງປະຊຸມສາກົນ ແລະ ຝຶກອົບຮົມ ACMF-ISSB ຢູ່ ສປປ ລາວ; ສໍາເລັດການຈັດກອງປະຊຸມປຶກສາຫາລືກ່ຽວກັບ ACMF Action Plan 2021-2025 End term review ຮ່ວມກັບ ACMF working group ແລະ ສະມາຊິກ ACMF (ຜ່ານທາງອອນລາຍ) ແລະ ສໍາເລັດການຈັດສໍາມະນາຮ່ວມກັບ ສະຖາບັນໂນມູຣະໃນຂອບ ASEAN +3 (ABMI) 1 ຫົວຂໍ້. ພ້ອມນີ້, ໄດ້ສໍາເລັດການປະກອບສ່ວນ ແລະ ເຂົ້າຮ່ວມກອງປະຊຸມລັດຖະມົນຕີກະຊວງການເງິນ ແລະ ຜູ້ວ່າການທະນາຄານກາງ ອາຊຽນຄັ້ງທີ 11 ແລະ ກອງປະຊຸມທີ່ຕິດພັນ, ຢູ່ແຂວງຫຼວງພະບາງ ແລະ ໄດ້ສໍາເລັດການປັບປຸງເອກະສານ ແລະ ນິຕິກໍາບາງສະບັບ ກ່ຽວກັບການສະໝັກເຂົ້າເປັນສະມາຊິກຂອງ IOSCO ເພື່ອສະເໜີໃຫ້ IOSCO ປະເມີນຄວາມສອດຄ່ອງທາງດ້ານນິຕິກໍາທີ່

ກ່ຽວຂ້ອງເບື້ອງຕົ້ນ (Preliminary Asset Procedure) ແລະ ກະກຽມນຳສົ່ງຊຸດເອກະສານສະບັບປັບປຸງໃຫ້ພາກສ່ວນທີ່ກ່ຽວຂ້ອງປະກອບຄຳເຫັນ.

**ຮູບພາບ 11: ກອງປະຊຸມພັດທະນາຕະຫຼາດທຶນອາຊຽນ (ASEAN Capital Markets Forum : ACMF Deputies meeting) ຄັ້ງທີ 1 ແລະ 2 ຢູ່ ສປປ ລາວ**






ຮູບພາບ 12: ກອງປະຊຸມພັດທະນາຕະຫຼາດທຶນອາຊຽນ (**ASEAN Capital Markets Forum: ACMF Chair meeting**) ຄັ້ງທີ 40 ແລະ 41 ຢູ່ ສປປ ລາວ






ຮູບພາບ 13: ງານສະເຫຼີມສະຫຼອງການພັດທະນາຕະຫຼາດທຶນອາຊຽນ ຄົບຮອບ 20 ປີ (The 20th Anniversary of the ACMF)




## III. ທິດທາງແຜນການ ປີ 2025

### 1. ຄາດຄະເນສະພາບຕະຫຼາດທຶນຂອງ ຕ່າງປະເທດ

ສະພາບຕະຫຼາດທຶນຂອງຕ່າງປະເທດ ຄາດວ່າຈະມີສິ່ງທ້າທາຍຫຼາຍ ຈາກສະພາບເສດຖະກິດໂລກ ເປັນຕົ້ນແມ່ນອັດຕາດອກເບ້ຍ ແລະ ນະໂຍບາຍການເງິນ ຂອງ FED ທີ່ຄາດການວ່າຈະຫຼຸດດອກເບ້ຍລົງ, ອັດຕາເງິນເຟີ້ທີ່ເພີ່ມຂຶ້ນ, ຄວາມສ່ຽງລະຫວ່າງປະເທດ ໂດຍອີງໃສ່ສະພາບທາງການເມືອງຂອງ ສ. ອາເມລິກາ ທີ່ອາດສົ່ງຜົນກະທົບຕໍ່ກັບ ເສດຖະກິດໂລກ ແລະ ການຄ້າລະຫວ່າງປະເທດ. ນອກຈາກນີ້, ເຕັກໂນໂລຢີ AI ກໍ່ມີອິດທິພົນຫຼາຍຕໍ່ການປ່ຽນແປງຕະຫຼາດ ໂດຍສະເພາະແມ່ນ ຮຸ້ນກຸ່ມ AI ແລະ Semiconductor ຊຶ່ງມີຄວາມທ້າທາຍໃນການສ້າງຜົນຕອບແທນຕາມທີ່ຜູ້ລົງທຶນຄາດຫວັງ.

### 2. ຄາດຄະເນສະພາບຕະຫຼາດທຶນຂອງ ສປປ ລາວ

ໃນປີ 2025 ຄາດການວ່າສະພາບການເສດຖະກິດໂດຍລວມຂອງ ສປປ ລາວ ກໍ່ຄືຕະຫຼາດທຶນ ອາດຈະມີທ່າອ່ຽງທີ່ດີຂຶ້ນ ເຫັນໄດ້ຈາກບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບ ຈຳນວນໜຶ່ງມີທ່າອ່ຽງການດຳເນີນງານທີ່ດີ ຊຶ່ງເປັນປັດໃຈສຳຄັນໃນການສ້າງສະພາບຄ່ອງໃຫ້ແກ່ຕະຫຼາດທຶນລາວ. ນອກຈາກນີ້, ກໍ່ມີຄວາມເປັນໄປໄດ້ສູງທີ່ຈະມີວິສາຫະກິດທີ່ມີທ່າແຮງ ແລະ ມີເງື່ອນໄຂເຂົ້າຈົດທະບຽນ ຫຼື ອອກຈຳໜ່າຍຮຸ້ນ, ຮຸ້ນກູ້ສີຂຽວ ໃນຕະຫຼາດຫຼັກຊັບລາວ ໂດຍຈະກາຍເປັນປັດໃຈສຳຄັນໃນການກະຕຸ້ນ ແລະ ສ້າງສີສັນ ໃຫ້ແກ່ຕະຫຼາດທຶນລາວ. ປີ 2025, ຈະເປັນປີທີ່ມີຄວາມທ້າທາຍສຳລັບຕະຫຼາດຫຼັກຊັບລາວໃນການປັບປຸງວຽກງານພາຍໃນຂອງຕົນ ໃຫ້ມີຄວາມເຂັ້ມແຂງຂຶ້ນ ໃນການພັດທະນາລະບົບການໃຫ້ບໍລິການໃໝ່ ເຊັ່ນ Mobile Trading App ແລະ ກົນໄກອື່ນໆ ເພື່ອຊຸກຍູ້ສົ່ງເສີມການເຄື່ອນໄຫວວຽກງານຫຼັກຊັບ ຢູ່ ສປປ ລາວ ໃຫ້ມີທີ່ກ້າວທີ່ດີຂຶ້ນເລື້ອຍໆ.

## 3. ໜ້າວຽກຕົ້ນຕໍທີ່ຕ້ອງໄດ້ສຸມໃສ່ໃນປີ 2025

### 3.1 ນິຕິກຳທີ່ນຳໃຊ້ເຂົ້າໃນການຄຸ້ມຄອງວຽກງານຫຼັກຊັບ ແລະ ນະໂຍບາຍມະຫາພາກຕໍ່ວຽກງານຫຼັກຊັບ

ອີງໃສ່ສະພາບການຂະຫຍາຍຕົວຂອງວຽກງານຫຼັກຊັບ ທັງພາຍໃນປະເທດ, ພາກພື້ນ ແລະ ສາກົນ ໃນແຕ່ລະໄລຍະ ໄດ້ຮຽກຮ້ອງໃຫ້ມີນິຕິກຳ ເພື່ອຄຸ້ມຄອງບັນດາພຶດຕິກຳ ຫຼື ການເຄື່ອນໄຫວວຽກງານຫຼັກຊັບທີ່ໄດ້ມີການພັດທະນາໃໝ່ ໃນແຕ່ລະໄລຍະ. ສຳລັບປີ 2025 ຄາດໝາຍ ແມ່ນໃຫ້ສຳເລັດການສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ຢ່າງໜ້ອຍ 05 ສະບັບ ເພື່ອເປັນບ່ອນອີງໃນການຄຸ້ມຄອງເຄື່ອນໄຫວວຽກງານຫຼັກຊັບໃຫ້ມີຄວາມຄ່ອງຕົວຍິ່ງຂຶ້ນ ໂດຍສະເພາະແມ່ນ ການສ້າງ ແລະ ປັບປຸງນິຕິກຳເພື່ອຮອງຮັບໃຫ້ແກ່ວຽກງານການສ້າງກະດານຮອງ ໃນອານາຄົດ.

### 3.2 ການຄຸ້ມຄອງການອອກຈຳໜ່າຍຫຼັກຊັບໃນຕະຫຼາດຂັ້ນໜຶ່ງ ແລະ ການຄຸ້ມຄອງການເຄື່ອນໄຫວຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ

ສືບຕໍ່ຊຸກຍູ້ ແລະ ຕິດຕາມການລາຍງານຂອງ ຕະຫຼາດຫຼັກຊັບລາວ ແລະ ບໍລິສັດຫຼັກຊັບ ໃນການຄົ້ນຄວ້າຊອກຫາເປົ້າໝາຍບໍລິສັດຈົດທະບຽນ ເພື່ອກະກຽມຄວາມພ້ອມໃນການລະດົມທຶນຜ່ານຕະຫຼາດທຶນ ແລະ ຈົດທະບຽນໃນຕະຫຼາດຫຼັກຊັບ ໃນແຕ່ລະໄລຍະ, ຄົ້ນຄວ້າຫັນລັດວິສາຫະກິດລະດົມທຶນຜ່ານກົນໄກຕະຫຼາດທຶນ, ຄົ້ນຄວ້າສ້າງເງື່ອນໄຂ ແລະ ສ້າງຄວາມເຂັ້ມແຂງຮອບດ້ານໃຫ້ແກ່ວິສາຫະກິດທີ່ເປັນເປົ້າໝາຍບໍລິສັດຈົດທະບຽນ ໃຫ້ສາມາດລະດົມທຶນຜ່ານຕະຫຼາດທຶນ ແລະ ສືບຕໍ່ຕິດຕາມ, ວິເຄາະ, ຄົ້ນຄວ້າກ່ຽວກັບ ການລາຍງານ ແລະ ເປີດເຜີຍຂໍ້ມູນ, ການປັບປຸງແຜນວຽກມາດຕະຖານ ການລາຍງານທາງການເງິນ (IFRS Roadmap) ພ້ອມທັງຄົ້ນຄວ້າປັບປຸງ ຄຳແນະນຳກ່ຽວກັບ ການປະເມີນການຈັດຕັ້ງປະຕິບັດການຄຸ້ມຄອງບໍລິຫານ (CG Scorecard).

### 3.3 ການຄຸ້ມຄອງຕະຫຼາດຫຼັກຊັບ ແລະ ການເຄື່ອນໄຫວໃນຕະຫຼາດຂັ້ນສອງ

ສຄຄຊ ຈະສືບຕໍ່ຕິດຕາມການເຄື່ອນໄຫວຂອງຕະຫຼາດຫຼັກຊັບຢ່າງໃກ້ຊິດ ຜ່ານການຕິດຕາມສະພາບການ ເຄື່ອນໄຫວຊື້ຂາຍຫຼັກຊັບ, ການກວດກາທາງເອກະສານ ແລະ ການກວດກາກັບທີ່, ພ້ອມທັງຊຸກຍູ້ໃຫ້ ຕະຫຼາດຫຼັກຊັບ ຕິດຕາມສະພາບການເໜັງຕີງຂອງລາຄາຫຼັກຊັບຂອງບັນດາບໍລິສັດຈົດທະບຽນ, ການຊື້ຂາຍຫຼັກຊັບ ທີ່ບໍ່ປຸດຕິທຳ, ການຝຶກອົບຮົມຍົກລະດັບຄວາມຮູ້ຂອງພະນັກງານ ແລະ ການປະຕິບັດຕາມພາລະບົບບາດຂອງຕົນ ຢ່າງມີປະສິດທິພາບ. ນອກຈາກນີ້, ຍັງຊຸກຍູ້ບັນດາວິສາຫະກິດພາຍໃນ ໃຫ້ໄດ້ອອກຈຳໜ່າຍຮຸ້ນກູ້ສີຂຽວ, ສັງຄົມ ແລະ ຍືນຍົງ ຢ່າງໜ້ອຍ 01 ກໍລະນີ, ສູ້ຊົນໃຫ້ສຳເລັດການສ້າງກະດານຊື້ຂາຍ ຮຸ້ນວິສາຫະກິດຂະໜາດນ້ອຍ ແລະ ກາງ ໃນຕະຫຼາດຫຼັກຊັບລາວ, ຄົ້ນຄວ້າຜະລິດຕະພັນໃໝ່ ເປັນຕົ້ນແມ່ນ ກົນໄກການສ້າງຕັ້ງກອງທຶນພື້ນຖານໂຄງລ່າງ ແລະ ກອງທຶນສິນເຊື່ອກາກບອນ ແລະ ຄົ້ນຄວ້າກົນໄກການຄຸ້ມຄອງກ່ຽວກັບການຊື້ຂາຍຫຼັກຊັບ ທີ່ມີຄວາມຜິດປົກກະຕິ ເພື່ອຄຸ້ມຄອງຜູ້ລົງທຶນ. ຄວບຄູ່ກັບການຊຸກຍູ້ໃຫ້ຜູ້ມີສ່ວນຮ່ວມໃຫ້ຄວາມຮູ້ຜູ້ລົງທຶນທີ່ລົງທຶນໃນຕະຫຼາດທຶນ, ເພື່ອຮັບປະກັນ ການດຳເນີນງານຂອງຕະຫຼາດມີສະຖຽນລະພາບ ແລະ ປົກປ້ອງຜູ້ລົງທຶນ ສຄຄຊ ຍັງສືບຕໍ່ຕິດຕາມ ແລະ ລົງກວດກາການເຄື່ອນໄຫວຂອງ ຕະຫຼາດຫຼັກຊັບລາວ ແລະ ສະຖາບັນສື່ກາງຢ່າງເປັນປົກກະຕິ ຜ່ານການລົງກວດກາ ແລະ ການນຳໃຊ້ລະບຽບການ ເພື່ອຮັບປະກັນການຄຸ້ມຄອງຄອງຜູ້ລົງທຶນທີ່ໄດ້ຕັດສິນໃຈລົງທຶນໃນຕະຫຼາດຫຼັກຊັບລາວ.

### 3.4 ການຄຸ້ມຄອງສະຖາບັນສື່ກາງດ້ານຫຼັກຊັບ ແລະ ນັກວິຊາຊີບທຸລະກິດຫຼັກຊັບ

ສືບຕໍ່ຕິດຕາມອັດຕາສ່ວນຄວາມພຽງພໍຂອງທຶນ (NCR), ປະເມີນຄວາມສ່ຽງຂອງບໍລິສັດຫຼັກຊັບ ແບບຕີລາຄາຄວາມສ່ຽງ (Risk-Based Supervision) ແລະ ການປະຕິບັດໜ້າທີ່ຂອງບໍລິສັດຫຼັກຊັບຕິດພັນກັບການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (AML/CFT), ຊຸກຍູ້ການສ້າງຕັ້ງບໍລິສັດບໍລິຫານກອງທຶນເພື່ອການລົງທຶນ ຫຼື ກອງ

ທຶນເພື່ອການລົງທຶນ ໃຫ້ໄດ້ຢ່າງໜ້ອຍ 1 ກອງທຶນ, ຊຸກຍູ້ການຈັດຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບ ໃຫ້ໄດ້ຢ່າງນ້ອຍ 01 ຄັ້ງ, ຊຸກຍູ້ບໍລິສັດຫຼັກຊັບສ້າງບົດວິເຄາະຫຼັກຊັບໃຫ້ໄດ້ 01 ບົດ, ຊຸກຍູ້ການສ້າງຕັ້ງສະມາຄົມໃນວຽກງານຫຼັກຊັບໃຫ້ໄດ້ 01 ແຫ່ງ, ສ້າງບົດຄົ້ນຄວ້າໃນການສ້າງຕັ້ງບໍລິສັດຈັດອັນດັບຄວາມໜ້າເຊື່ອຖືພາຍໃນປະເທດ, ຊຸກຍູ້ການສ້າງສະພາບຄ່ອງໃຫ້ແກ່ຮຸ້ນທີ່ຂາດສະພາບຄ່ອງ ຢູ່ ຕະຫຼາດຫຼັກຊັບລາວ (Liquidity Provider), ສ້າງບົດຄົ້ນຄວ້າຄວາມເປັນໄປໄດ້ໃນການໃຫ້ກູ້ຢືມຮຸ້ນຢູ່ ຕະຫຼາດຫຼັກຊັບລາວ ແລະ ບົດຄວາມເປັນໄປໄດ້ໃນການເຊື່ອມຕໍ່ບັນຊີຫຼັກຊັບກັບຫຼາຍທະນາຄານຜ່ານລະບົບຂອງ ບໍລິສັດ ລາວເນເຊີນນໍ ເພເມັ້ນ ເນັດເວີກ ຈຳກັດ ພ້ອມນີ້ກໍ່ຈະສືບຕໍ່ຕິດຕາມ ແລະ ກວດກາການເຄື່ອນໄຫວທຸລະກິດ ຂອງສະຖາບັນສື່ກາງດ້ານຫຼັກຊັບອື່ນຜ່ານທາງເອກະສານ ຢ່າງເປັນປົກກະຕິ ແລະ ລົງກວດກາກັບທີ່ບໍລິສັດຫຼັກຊັບ.

### 3.5 ການປົກປ້ອງຜູ້ລົງທຶນລາຍຍ່ອຍ

ສຄຄຊ ຈະສືບຕໍ່ໃນການຕິດຕາມ ແລະ ກວດກາ ໃນການຈັດຕັ້ງປະຕິບັດນິຕິກຳໃຫ້ເຂັ້ມງວດ ພ້ອມທັງສະກັດກັ້ນ ແລະ ແກ້ໄຂ ຕໍ່ກັບການລະເມີດລະບຽບກົດໝາຍໃນຂົງເຂດວຽກງານຫຼັກຊັບ ໃຫ້ຫຼຸດລົງເທື່ອລະກ້າວ ດ້ວຍຮູບການສ້າງ ແລະ ປັບປຸງ ນິຕິກຳທີ່ກ່ຽວຂ້ອງໃຫ້ມີຄວາມໜັກແໜ້ນ, ຮັດກຸມ. ພ້ອມນີ້ ເພື່ອປະຕິບັດຕາມຄຳສັ່ງ ເລກທີ 02/ນຍ ສຄຄຊ ຈະສືບຕໍ່ຄົ້ນຄວ້າສ້າງ ແລະ ປັບປຸງ ນິຕິກຳທີ່ຕິດພັນກັບການປົກປ້ອງຜູ້ລົງທຶນລາຍຍ່ອຍ ໃນຂົງເຂດວຽກງານຫຼັກຊັບ ແລະ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອປັບປຸງນິຕິກຳທີ່ກ່ຽວຂ້ອງກັບພາກສ່ວນອື່ນທີ່ຕິດພັນກັບວຽກງານດັ່ງກ່າວ ເປັນຕົ້ນແມ່ນຕິດຕາມ ສານປະຊາຊົນສູງສຸດ ໃນການປັບປຸງກົດໝາຍວ່າການດຳເນີນຄະດີແພ່ງ ແລະ ກົດໝາຍວ່າດ້ວຍຄ່າທຳນຽມສານ ຕໍ່ກັບບາງເນື້ອໃນທີ່ ສຄຄຊ ໄດ້ສະເໜີໃຫ້ພາກສ່ວນດັ່ງກ່າວພິຈາລະນາ. ນອກນັ້ນ ຈະເພີ່ມທະວີໃນການໂຄສະນາເຜີຍແຜ່ ໃຫ້ມວນຊົນ ໄດ້ຮັບຮູ້ ແລະ ເຂົ້າໃຈຕໍ່ລະບຽບກົດໝາຍໃນຂົງເຂດວຽກງານຫຼັກຊັບໃຫ້ຫຼາຍຂຶ້ນ ແລະ ຂົງເຂດກ່ຽວຂ້ອງທີ່ປິ່ນອ້ອມກັບວຽກງານຫຼັກຊັບ. ພ້ອມທັງ, ເອົາໃຈໃສ່ຕິດຕາມ ຜ່ານຊ່ອງທາງການຮ້ອງຟ້ອງ ຫຼື ແຈ້ງຄວາມຈາກສັງຄົມ ຢ່າງເປັນປົກກະຕິ ແລະ ຕໍ່ເນື່ອງ ໃຫ້ເລິກເຊິ່ງ ແລະ ກວ້າງຂວາງຂຶ້ນກວ່າເກົ່າ.

### 3.6 ການໂຄສະນາເຜີຍແຜ່ ແລະ ໃຫ້ຄວາມຮູ້ແກ່ມວນຊົນ

ເພື່ອເຮັດໃຫ້ມວນຊົນມີຄວາມຮັບຮູ້ ແລະ ເຂົ້າໃຈກ່ຽວກັບວຽກງານຕະຫຼາດທຶນຂອງ ສປປ ລາວ ນັບມື້ນັບຫຼາຍຂຶ້ນ, ສຄຄຊ ຈະສົມທົບກັບ ຕະຫຼາດຫຼັກຊັບລາວ ແລະ ບໍລິສັດຫຼັກຊັບ ຄົ້ນຄວ້າສ້າງຫຼັກສູດຝຶກອົບຮົມວຽກງານຫຼັກຊັບ ແລະ ຫຼັກສູດສຳລັບນັກວິຊາຊີບທຸລະກິດຫຼັກຊັບ ພ້ອມທັງ ຈັດຝຶກອົບຮົມໃຫ້ນັກວິຊາຊີບທຸລະກິດຫຼັກຊັບ ຢ່າງໜ້ອຍ 1 ຄັ້ງ/ປີ. ພ້ອມດຽວກັນນີ້, ຈະສືບຕໍ່ປັບປຸງເນື້ອໃນ ແລະ ຮູບແບບໂຄສະນາເຜີຍແຜ່ ເພື່ອໃຫ້ແທດເໝາະກັບແຕ່ລະກຸ່ມເປົ້າໝາຍຜ່ານຊ່ອງທາງໂຄສະນາຕ່າງໆ ເພື່ອໃຫ້ສັງຄົມໄດ້ຮັບຮູ້ຢ່າງກວ້າງຂວາງ ແລະ ທົ່ວເຖິງຫຼາຍຂຶ້ນ ໂດຍສະເພາະ ເຜີຍແຜ່ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ), ລະບຽບການທີ່ກ່ຽວຂ້ອງ ແລະ ໂຄສະນາເຜີຍແຜ່ກັບທີ່ວຽກງານຕະຫຼາດທຶນໃນຫົວຂໍ້ຕ່າງໆຢ່າງມີຈຸດສຸມ ໃຫ້ແກ່ພາກສ່ວນຕ່າງໆໃນສັງຄົມຕາມຄວາມເໝາະສົມ; ຄຽງຄູ່ກັນນັ້ນ ເພື່ອສ້າງເງື່ອນໄຂ ໃຫ້ກັບສັງຄົມທຸກພາກສ່ວນໃນ ສປປ ລາວ ໃຫ້ສາມາດເຂົ້າເຖິງຂໍ້ມູນຄວາມຮູ້ວຽກງານຕະຫຼາດທຶນໄດ້ຢ່າງສະດວກຍິ່ງຂຶ້ນ ສຄຄຊ ຈະຫັນການໂຄສະນາເຜີຍແຜ່ ຜ່ານຊ່ອງທາງສື່ອອນລາຍໃຫ້ຫຼາຍຂຶ້ນ ເປັນຕົ້ນແມ່ນ ຜ່ານທາງ Facebook, Youtube, Tiktok ໃນຮູບແບບຕ່າງໆເຊັ່ນ: ພາບສະແດງຂໍ້ມູນ (Infographic), ກາຕູນສັ້ນ (Animation), ການນຳສະເໜີໃນຮູບແບບວີດີໂອ (Podcast) ແລະ ອື່ນໆ. ນອກນີ້, ກໍ່ຈະສືບຕໍ່ສຶກສາ ແລະ ຄົ້ນຄວ້າກ່ຽວກັບການສ້າງຕັ້ງສູນໃຫ້ຄວາມຮູ້ວຽກງານຕະຫຼາດທຶນ.

### 3.7 ການຮ່ວມມືສາກົນ

ສຄຄຊ ຈະສືບຕໍ່ເພີ່ມທະວີການຮ່ວມມືກັບປະເທດເພື່ອນມິດຍຸດທະສາດ ທັງພາກພື້ນ ແລະ ສາກົນ ໃຫ້ເຂົ້າສູ່ລວງກວ້າງ ແລະ ລວງເລິກ ເພື່ອພັດທະນາວຽກງານຕະຫຼາດທຶນ ສປປ ລາວ ໃຫ້ມີຄວາມເຂັ້ມແຂງ ແລະ ກ້າວສູ່ມາດຖານສາກົນເທື່ອລະກ້າວ ໂດຍຜ່ານການຈັດຕັ້ງປະຕິບັດການຮ່ວມມືສອງຝ່າຍ ເປັນຕົ້ນແມ່ນ: ຄຄຊ ສປ.ຈີນ, ຄຄຊ ສສ.ຫວຽດນາມ, ກລຕ ໄທ, ຄຄຊ ກຳປູເຈຍ, ຄຄຊ ສ.ເກົາຫຼີ, ຍີ່ປຸ່ນ, CPA Australia, IOD ໄທ, ຕະຫຼາດຫຼັກຊັບໄທ, ລັດຖະບານລຸກຊຳບວກ ລວມທັງ ກະກຽມເປັນເຈົ້າພາບຈັດກອງປະຊຸມຮ່ວມມືສອງຝ່າຍຄັ້ງທີ 4 ປະຈຳປີ 2025 ຮ່ວມກັບ ຄຄຊ ກຳປູເຈຍ; ສືບຕໍ່ສ້າງສາຍພົວພັນຮ່ວມຫຼາຍຝ່າຍ ເປັນຕົ້ນແມ່ນ: ການຮ່ວມມືໃນການພັດທະນາຕະຫຼາດທຶນໃນຂອບ 5 ປະເທດເຂດແມ່ນໍ້າຂອງ ແລະ ການຮ່ວມມືໃນຂອບອາຊຽນ; ສືບຕໍ່ຮ່ວມມືກັບບັນດາອົງການຈັດຕັ້ງສາກົນຕ່າງໆ ເປັນຕົ້ນ: ທະນາຄານພັດທະນາອາຊີ (ADB), ອົງການການເງິນສາກົນ (IFC), ທະນາຄານໂລກ (WB) ເພື່ອພັດທະນາຜະລິດຕະພັນສີຂຽວ, ສັງຄົມ ແລະ ຍືນຍົງ ຂອງ ສປປ ລາວ ພ້ອມທັງ ກະກຽມສະເໜີ IOSCO ປະເມີນຄວາມສອດຄ່ອງຂອງນິຕິກຳທີ່ກ່ຽວຂ້ອງເບື້ອງຕົ້ນ (Preliminary Assessment Procedure: PA) ກໍຄື ການປະເມີນຂອງ ຄະນະກຳມະການທົບທວນຄວາມສອດຄ່ອງຂອງ IOSCO (Screening Group) ແລະ ຄົ້ນຄວ້າສືບຕໍ່ແຜນການຮ່ວມມືຊ່ວຍເຫຼືອສາມຝ່າຍຈາກລຸກຊຳບວກ (ໂຄງການ Lao/032).

## <u>ຂໍ້ມູນຕິດຕໍ່ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ (ສຄຄຊ)</u>




ທີ່ຕັ້ງສຳນັກງານ: ບ້ານ ໂພນສະອາດ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ.

PO. Box: 19

Phone: (856-21) 217 770

Fax: (856-21) 217 806

E-mail: lsco@lsc.gov.la

Website: www.lsc.gov.la

ໂທລະສັບສາຍດ່ວນ: 1602

Facebook: ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບລາວ

Youtube: ລາຍການ “ເສັ້ນທາງສູ່ຕະຫຼາດທຶນລາວ”.